ລັດຖະບານ ແຫ່ງ ສປປ ລາວ

ແຜນແມ່ບົດແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ 2009 – 2013

ແຜນຍຸດທະສາດ 5 ປີ ເພື່ອການແກ້ໄຂບັນຫາຢາເສບຕິດ ຢູ່ ສປປ ລາວ

UNODC

United Nations Office on Drugs and Crime

ລັດຖະບານ ແຫ່ງ ສປປ ລາວ

ແຜນແມ່ບົດແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ 2009–2013

(ແຜນຍຸດທະສາດ 5 ປີ ເພື່ອການແກ້ໄຂບັນຫາຢາເສບຕິດຢູ ສປປ ລາວ)

ແຜນແມ່ບົດແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ
ສະບັບນີ້ ໄດ້ຮັບການອະນຸມັດຈາກລັດຖະບານ ແຫ່ງ ສປປ ລາວ
ໃນເດືອນ ກຸມພາ 2009

ການຈັດພິມ ແຜນແມ່ບົດແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ ໄດ້ຮັບການສະໜັບສະໜູນຈາກອົງການ ສປຊ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາດຊະຍາກຳ ແລະ ລັດຖະບານ ເຢຍລະມັນ ຜ່ານໂຄງການ ຮ່ວມມືລະດັບໂລກ ກ່ຽວກັບການພັດທະນາທາງເລືອກ ທົດແທນການປູກຝິ່ນ (GLO/I44/Project).

ບົດນຳ:

ແຜນແມ່ບົດ ວ່າດ້ວຍການຄວບຄຸມຢາເສບຕິດ ແຫ່ງຊາດ ໄດ້ສ້າງຂຶ້ນ ເພື່ອແກ້ໄຂບັນຫາການຜະລິດ, ຊົມໃຊ້, ການລັກລອບຄ້າຂາຍ, ລຳລຽງຂົນສົ່ງ ແລະ ການກໍ່ອາດຊະຍາກຳ ທີ່ຕິດພັນກັບຢາເສບຕິດທີ່ຜິດກົດໝາຍ ທີ່ເກີດຂຶ້ນ ແລະ ແຜ່ຂະຫຍາຍຢູ່ໃນ ສປປ ລາວ. ແຜນແມ່ບົດນີ້ ຍັງຈະຊ່ວຍແກ້ໄຂຄວາມສ່ຽງຕ່າງໆ ທີ່ເພີ່ມຂຶ້ນ, ແຕະຕ້ອງເຖິງຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ. ແຜນແມ່ບົດສະບັບໃໝ່ນີ້ ຈະອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຢາເສບຕິດ ຊຶ່ງໄດ້ຜ່ານການຮັບຮອງເອົາຈາກສະພາແຫ່ງຊາດ ໃນວັນທີ 25 ທັນວາ ປີ 2007 ແລະ ປະທານປະເທດ ກໍໄດ້ອອກລັດຖະດຳລັດ ປະກາດໃຊ້ ໃນວັນທີ 14 ມັງກອນ 2008. ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ (ກຄສ ຂັ້ນສູນກາງ), ທີ່ມີໜ້າທີ່ຮັບຜິດຊອບຫຼາຍຂຶ້ນ ພາຍໃຕ້ກົດໝາຍສະບັບນີ້, ຈະເປັນຜູ້ປະສານງານໃນການຈັດຕັ້ງປະຕິບັດແຜນແມ່ບົດດັ່ງກ່າວ.

ສະພາບກົດໝາຍໃນປັດຈຸບັນ:

ສປປລາວ ຕັ້ງຢູ່ເຂດໃຈກາງຂອງຂົງເຂດແມ່ນ້ຳຂອງ ແລະ ຕັ້ງຢູ່ເຂດຂອງການຜະລິດຢາຝິ່ນ ໃນໄລຍະຜ່ານມາ ເຊິ່ງເຄີຍເອີ້ນວ່າ: "ສາມຫຼ່ຽມຄຳ". ປະເທດລາວມີຊາຍແດນຕິດກັບ 5 ປະເທດ ຂອງອະນຸພາກພື້ນແມ່ນ້ຳຂອງ (ຄື: ສປ ຈີນ, ລາຊະອານາຈັກ ກຳປູເຈຍ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສສ ຫວຽດນາມ) ແລະ ມີຊາຍແດນອ້ອມຮອບຍາວ 5.038 ກິໂລແມັດ.

ໃນປີ 1975, ໃນເວລາສິ້ນສຸດສົງຄາມອິນດູຈີນ, ສປປ ລາວ ກໍໄດ້ຖືກສ້າງຕັ້ງຂຶ້ນ. ໃນປີ 1986, ສປປ ລາວ ໄດ້ຮັບຮອງເອົາກົນໄກເສດຖະກິດໃໝ່ ເພື່ອຂະຫຍາຍເສດຖະກິດຂອງຕົນ ໂດຍມີການວາງແຜນຈາກສູນກາງ ຈົນຮອດທ້ອງຖິ່ນຂັ້ນຕ່າງໆ ຊຶ່ງມັນໄດ້ສົ່ງເສີມ ໃຫ້ມີການເຂົ້າຮ່ວມຂອງວິສະຫະກິດເອກະຊົນ. ເພື່ອຊຸກຍູ້ວຽກງານດັ່ງກ່າວ, ລັດຖະບານໄດ້ປັບປຸງໂຄງສ້າງດ້ານກົດໝາຍຂອງຕົນ ພາຍໃຕ້ລັດຖະທຳມະນູນໃໝ່ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາໃນປີ 1991 ເພື່ອຮັບປະກັນສິດທິພື້ນຖານສ່ວນບຸກຄົນ.

ຈາກນັ້ນມາ, ເສດຖະກິດແຫ່ງຊາດ ກໍໄດ້ມີການຂະຫຍາຍຕົວ ສະເລ່ຍ 6% ຕໍ່ປີ ຍົກເວັ້ນແຕ່ໃນປີ 1997 ຊຶ່ງເປັນປີທີ່ມີວິກິດການ ດ້ານການເງິນຂອງອາຊຽນ, ຊຶ່ງມັນໄດ້ປະກອບສ່ວນເຮັດໃຫ້ ສປປ ລາວ ຂະຫຍາຍລະບົບເສັ້ນທາງທີ່ເປັນທາງຫຼວງ (ຮາຍເອ) ຫຼາຍເສັ້ນ ໃນທົ່ວປະເທດ ບາງສ່ວນກໍແມ່ນເສັ້ນທາງຫຼວງ

(ຮາຍເອ ຂອງອາຊຽນ), ກໍ່ສ້າງຂົວຂ້າມນ້ຳຂອງ 3 ແຫ່ງ (ຍັງມີແຜນທີ່ຈະສ້າງຕື່ມອີກ), ແລະ ກຳລັງກໍ່ສ້າງເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່ອີກຫຼາຍແຫ່ງ.

ໃນເວລານັ້ນ, ສປປ ລາວ ໄດ້ຂະຫຍາຍການຕິດຕໍ່ພົວພັນກັບສາກົນ ເຊັ່ນ: ໄດ້ເຂົ້າຮ່ວມເປັນສະມາຊິກອາຊຽນ ໃນເດືອນກໍລະກົດ ປີ 1997. ກ່ຽວກັບການຄວບຄຸມຢາເສບຕິດນັ້ນ ສປປ ລາວ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບອົງການ ສປຊ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກຳ (UNODC) ໃນປີ 1993 ເພື່ອປະຕິບັດແຜນງານຫຼຸດຜ່ອນການຜະລິດ ແລະ ການຊົມໃຊ້ຢາເສບຕິດຢູ່ດິນແດນຂອງຕົນ. ຫຼັງຈາກນັ້ນ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ສະໄໝພິເສດຂອງອົງການ ສປຊ ຄັ້ງທີ 20 (UNGASS) ກ່ຽວກັບສະພາບຢາເສບຕິດຂອງໂລກ ໃນປີ 1998, ລັດຖະບານໄດ້ສ້າງແຜນຍຸດທະສາດ ເພື່ອລົບລ້າງການປູກຝິ່ນແບບດຸ່ນດ່ຽງ ຊຶ່ງໃນໄລຍະຕໍ່ມາ ສປປ ລາວ ກໍສາມາດລົບລ້າງການປູກຝິ່ນໄດ້ໂດຍພື້ນຖານ.

ເຖິງແມ່ນວ່າຈະມີຄວາມຄືບໜ້າໃນວຽກງານດັ່ງກ່າວຂ້າງເທິງກໍ່ຕາມ, ສປປ ລາວ ກໍຍັງນອນຢູ່ໃນກຸ່ມປະເທດກຳລັງພັດທະນາຢູ່ ຊຶ່ງມີຊາວໄຮ່ນາຜູ້ຫາເຊົ້າກິນຄ່ຳກວມເຖິງ 80% ແລະ ໃນຈຳນວນນີ້ປະຊາຊົນປະມານ 4 ລ້ານຄົນ ໃນຈຳນວນປະຊາກອນທັງໝົດ 6 ລ້ານຄົນ ມີລາຍຮັບ 2 ໂດລາ ຫຼື ໜ້ອຍກວ່ານັ້ນຕໍ່ມື້. ສປປ ລາວ ກໍ່ຍັງສືບຕໍ່ສູ້ຊົນ ເພື່ອບັນລຸເປົ້າໝາຍໃນການຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ2020. ດັດສະນີການພັດທະນາຊັບພະຍາກອນມະນຸດໃນໂລກ ຂອງອົງການ ສປຊ ເພື່ອການພັດທະນາ (UNDP) ປັດຈຸບັນໄດ້ຈັດລຽງ ສປປ ລາວ ຢູ່ໃນອັນດັບທີ 133 ໃນຈຳນວນທັງໝົດ 177 ປະເທດ ໂດຍທີ່ມີ "ການພັດທະນາຊັບພະຍາກອນມະນຸດໃນລະດັບປານກາງ". ສິ່ງທີ່ສຳຄັນຈະບັນລຸເປົ້າໝາຍດັ່ງກ່າວ ແມ່ນການແກ້ໄຂໄພຂົ່ມຂູ່ທີ່ມີຕໍ່ສັງຄົມ ແລະ ຕໍ່ຄວາມໝັ້ນຄົງຂອງປະເທດຈາກຢາເສບຕິດເຊັ່ນ: ການໃຊ້ຄວາມຮຸນແຮງ, ການກໍ່ອາຊະຍາ



Sources: LCDC, UNODC

ກຳ, ການສໍ້ລາດບັງຫຼວງ, ການຟອກເງິນ, ການຄ້າມະນຸດ, ການຕິດເຊື້ອເອດຈໄອວີ /ເອດສ ແລະ ອື່ນໆ.

ການລົບລ້າງການປູກຝິ່ນ :

ການປູກຝິ່ນເພື່ອສ້າງລາຍຮັບ ໄດ້ເລີ່ມຕົ້ນຂຶ້ນຕັ້ງແຕ່ເວລາທີ່ປະເທດລາວໄດ້ເປັນ ຫົວເມືອງຂຶ້ນຂອງຕ່າງປະເທດ. ມາຮອດປີ 1990, ສປປ ລາວ ໄດ້ກາຍເປັນ ປະເທດ ທີ່ປູກຝິ່ນຫຼາຍເປັນອັນດັບທີ 3 ແລະ ມີຄົນຕິດຝິ່ນຫຼາຍເປັນອັນດັບທີ 2 ຂອງໂລກ. ເຖິງຢ່າງໃດກໍ່ຕາມ, ພາຍຫຼັງໄດ້ຈັດຕັ້ງປະຕິບັດ ແຜນຍຸດທະສາດວ່າ ດ້ວຍການຄວບຄຸມຢາເສບຕິດຄັ້ງທຳອິດ (1994-1999) ແລະ ແຜນຍຸດທະສາດ ເພື່ອລົບລ້າງການປູກຝິ່ນແບບດຸ່ນດ່ຽງ (2000-2006) ແລ້ວ, ສປປ ລາວ ສາ ມາດຫຼຸດຜ່ອນການປູກຝິ່ນໄດ້ໂດຍພື້ນຖານ. ມາຮອດ ວັນທີ 14 ກຸມພາ 2006, ສປປ ລາວ ສາມາດປະກາດຢ່າງເປັນທາງການເຖິງຜົນສຳເລັດໃນການລົບລ້າງ ການປູກຝິ່ນໃນຂອບເຂດທົ່ວປະເທດໄດ້ໂດຍພື້ນຖານ.

ການສຳຫຼວດຝິ່ນໂດຍ ກຄສ ຂັ້ນສູນກາງ ແລະ ອົງການ ສປຊ ເພື່ອຄວບຄຸມຢາ ເສບຕິດ ແລະ ຕ້ານອາດຊະຍາກຳ ໄດ້ລາຍງານໃຫ້ຊາບວ່າ ຈາກທີ່ເຄີຍມີ 2,056 ບ້ານ ທີ່ເຄີຍປູກຝິ່ນໃນເນື້ອທີ່ທັງໝົດ 26,837 ເຮັກຕາ ໃນປີ 1997/1998, ເນື້ອ



Sources: LCDC, UNODC

ທີ່ດັ່ງກ່າວໄດ້ຫຼຸດລົງເຫຼືອພຽງບໍ່ເຖິງ 1,600 ຮຕ. ຫຼື ຫຼຸດລົງຫຼາຍກວ່າ 94% ໃນປີ 2008. ຍ້ອນການຜະລິດຝິ່ນຫຼຸດລົງ ແລະ ຝິ່ນກໍມີໜ້ອຍ ຈຶ່ງເຮັດໃຫ້ລາຄາຝິ່ນເພີ່ມຂຶ້ນສູງເຖິງ 1,300 ໂດລາ/ກິໂລ ຈາກ 80 ໂດລາ/ກິໂລ ໃນປີ 2000.

ຢູ່ໃນຊ່ວງໄລຍະເວລາດຽວກັນນັ້ນຈຳນວນຜູ້ຕິດຝິ່ນໄດ້ຫຼຸດລົງຈາກປະມານ 63,000 ຄົນ ເຫຼືອພຽງ 7,700ຄົນ. ຕັ້ງແຕ່ປີ 2002, ອົງການ ສປຊ ເພື່ອ ຄວບຄຸມຢາເສບຕິດ ແລະ ຕ້ານອາດຊະຍາກຳ ແລະ ພະແນກຄວບຄຸມຢາເສບຕິດຂອງສະຖານທູດອາເມລິກາປະຈຳລາວໄດ້ໃຫ້ການຊ່ວຍເຫຼືອເພື່ອບຳບັດ-ປິ່ນປົວຜູ້ຕິດຝິ່ນ ໂດຍຊຸມຊົນມີສ່ວນຮ່ວມໃນຂອບເຂດທົ່ວປະເທດ ຊຶ່ງເປັນວິທີການທີ່ມີປະສິດທິຜົນ ແລະ ຍັງສືບຕໍ່ຂະຫຍາຍຕົວ. ເຖິງຢ່າງໃດກໍ່ຕາມ, ກໍຍັງມີຜູ້ຕິດຄືນໃໝ່ອີກປະມານ 4,000 ຄົນຊຶ່ງໄດ້ເຮັດໃຫ້ຕົວເລກຜູ້ເສບຝິ່ນທັງໝົດມີຫຼາຍກວ່າ 12,000 ໃນປັດຈຸບັນ. ການສູບຝິ່ນເຮັດໃຫ້ມີການສູນເສຍຊັບພະຍາກອນອັນມີຄ່າດ້ານການເງິນ, ຫຼຸດຜ່ອນສະມັດຕະພາບການຜະລິດໃນຄົວເຮືອນ, ເພີ່ມການໃຊ້ຄວາມຮຸນແຮງພາຍໃນ ແລະ ເປັນອຸປະສັກຕໍ່ຄວາມພະຍາຍາມໃນການປະຕິບັດແຜນການຫຼຸດຜ່ອນຄວາມທຸກຍາກຂອງພັກ-ລັດວາງອອກ.

ແຜນທີ່ຄວາມທຸກຈົນໃນ ສປປ ລາວ



ການລົບລ້າງການປູກຝິ່ນຍັງຢູ່ໃນໄລຍະທີ່ມີຄວາມອ່ອນໄຫວຫຼາຍ ແລະ ລັດຖະບານແຫ່ງ ສປປ ລາວ ກໍໄດ້ຈັດເຂົ້າເປັນບູລິມະສິດເພື່ອໃຫ້ບັນຫາດັ່ງກ່າວ ມີຄວາມຍືນຍົງ. ການປູກຝິ່ນ ແລະ ການສູບຝິ່ນ ຕິດພັນກັນຢ່າງສະໜິດແໜ້ນ ກັບຄວາມທຸກຈົນຢູ່ໃນ 47 ເມືອງ ທີ່ທຸກຍາກກ່ວາໝູ່ ຊຶ່ງກຳນົດໂດຍແຜນງານເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດນັ້ນ, 32 ເມືອງ ແມ່ນເມືອງ ທີ່ເຄີຍມີການປູກຝິ່ນ.

ການສຳຫຼວດຜົນກະທົບທາງດ້ານເສດຖະກິດ-ສັງຄົມ ໂດຍ ກຄສ ຂັ້ນສູນກາງ ແລະ ອົງການ ສປຊ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາດຊະຍາກຳ ໃນປີ 2005 ໄດ້ສະແດງໃຫ້ເຫັນວ່າມີປະມານ 50% ຂອງບ້ານທີ່ເຄີຍປູກຝິ່ນ ອາດກັບຄືນມາປູກຝິ່ນຄືນໃໝ່ອີກ ຍ້ອນຂາດການພັດທະນາເພື່ອຫາສິ່ງທົດແທນ ແລະ ໂອກາດອື່ນໆ. ການສຳຫຼວດຝິ່ນປະຈຳປີ 2005 ຍັງໄດ້ສະແດງໃຫ້ເຫັນວ່າ ລາຍຮັບຂອງຄອບຄົວ ທີ່ປູກຝິ່ນແມ່ນ 139 ໂດລາຕໍ່ປີ, ຊຶ່ງໃນຂະນະດຽວກັນນັ້ນ, ລາຍຮັບຂອງຄອບຄົວທີ່ບໍ່ປູກຝິ່ນແມ່ນ 231 ໂດລາ ຕໍ່ປີ. ເຖິງແມ່ນວ່າລາຍຮັບຢູ່ເຂດຊົນນະບົດໂດຍທົ່ວໄປຈະມີການເພີ່ມຂຶ້ນກໍ່ຕາມ, ແຕ່ລາຍຮັບຂອງຄອບຄົວຜູ້ທີ່ເຄີຍປູກຝິ່ນຈະເພີ່ມຂຶ້ນຊ້າກວ່າລາຍຮັບຂອງຄອບຄົວທີ່ບໍ່ເຄີຍປູກຝິ່ນ.

ຍ້ອນມີຄວາມແຕກຕ່າງກັນຄືແນວນັ້ນ ບວກກັບລາຄາຝິ່ນສູງຂຶ້ນ ອາດເຮັດໃຫ້ຜູ້ທີ່ເຄີຍປູກຝິ່ນກັບໄປປູກຝິ່ນຄືນໃໝ່ອີກ. ຖ້າຫາກເຂົາເຈົ້າກັບຄືນມາປູກຝິ່ນຄືນໃໝ່ແທ້, ການທີ່ຈະລົບລ້າງການປູກຝິ່ນຄືນອີກນັ້ນຈະຍາກຫຼາຍຍ້ອນຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການຈັດຕັ້ງຈະຫຼຸດລົງ ແລະ ການກໍ່ອາຊະຍາກຳຂ້າມຊາດຢູ່ຕາມຊາຍແດນກໍຈະເພີ້ມຂຶ້ນ.

ລັດຖະບານ ໄດ້ສ້າງແຜນງານການລົບລ້າງການປູກຝິ່ນແບບຍືນຍົງ ພາຍຫຼັງລົບລ້າງການປູກຝິ່ນ ໂດຍເລັ່ງໃສ່ການແກ້ໄຂຄວາມທຸກຍາກເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 6 (2006-2010).

ອາຊະຍາກຳທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ການແຜ່ລະບາດຂອງຢາບ້າ:

ບັນຫາດັ່ງກ່າວບໍ່ຄືກັບການປູກຝິ່ນທີ່ເປັນບໍ່ເກີດແຫ່ງຄວາມທຸກຈົນ, ແຕ່ບັນຫາຢາເສບຕິດປະເພດອື່ນເປັນຕົ້ນ ແມ່ນຢາບ້າທີ່ກຳລັງເກີດຂຶ້ນຢູ່ ສປປ ລາວ ແມ່ນການກໍ່ອາຊະຍາກຳ.

ຕັ້ງແຕ່ທ້າຍຊຸມປີ 1990 ເປັນຕົ້ນມາ ການຄ້າຂາຍ ແລະ ລຳລຽງຂົນສົ່ງຢາບ້າ, ເຮໂລອິນ, ສານເຄມີຕົ້ນ ແລະ ສານເຄມີທີ່ຜິດກົດໝາຍອື່ນໆ ຜ່ານ ສປປ ລາວ

ປະເມີນຜົນຜູ້ມີຄວາມສ່ຽງຂອງການຊົມໃຊ້ຢາບ້າ



Source: LCDC

ໂດຍກຸ່ມອາຊະຍາກອນຂ້າມຊາດ ໄດ້ມີການຂະຫຍາຍໂຕ ແລະ ລະບົບເສັ້ນທາງຄົມມະນາຄົມ ໄດ້ຮັບການປັບປຸງ, ພວກເຂົາໄດ້ຂົນສົ່ງສິນຄ້າຜິດກົດໝາຍ ຜ່ານ ລາວ ແລະ ໄດ້ຊອນເຊື່ອໃຫ້ຊາວໜຸ່ມລາວຫັນມາທົດລອງຢາເສບຕິດປະເພດຢາບ້າ, ການກໍ່ອາຊະຍາກຳທີ່ກ່ຽວຂ້ອງກໍໄດ້ເພີ່ມຂຶ້ນ. ອີງຕາມບົດລາຍງານຂອງອົງການ ສປຊ ໄດ້ຊີ້ໃຫ້ເຫັນວ່າການຄ້າມະນຸດຢູ່ ສປປ ລາວ ແມ່ນໄດ້ເພີ່ມຂຶ້ນ "ສູງ".

ການຄ້າຂາຍ ແລະ ລຳລຽງຂົນສົ່ງຢາເສບຕິດ ເຮັດໃຫ້ມີການຊົມໃຊ້ຢາເສບຕິດເພີ່ມຂຶ້ນ. ຍ້ອນມີການລັກລອບນຳເຂົ້າເຮໂລອິນຈາກບ່ອນອື່ນໆ ໃນອາຊີຜ່ານ ສປປ ລາວ, ຈຶ່ງສັງເກດເຫັນການຊົມໃຊ້ເຮໂລອິນ ໂດຍການສັກເຂົ້າເສັ້ນເລືອດ ຢູ່ຕາມເຂດຊາຍແດນ ແລະ ຢູ່ບາງຕົວເມືອງໃຫຍ່ຕ່າງໆ ຕັ້ງແຕ່ປີ 2004 ເປັນຕົ້ນມາ.

ກ່ອນປີ 1996, ພວກເຮົາບໍ່ເຄີຍໄດ້ຍິນຊື່ຢາເສບຕິດປະເພດຢາບ້າ ແຕ່ພໍຕົກມາຮອດປີ 2006 ໄດ້ມີການລາຍງານຢ່າງບໍ່ເປັນທາງການໃຫ້ຮູ້ວ່າ ໄດ້ມີຜູ້ຊົມໃຊ້ຢາບ້າຢູ່ໃນລາວ ປະມານ 40,000 ກວ່າຄົນ. ຢາບ້າໄດ້ແຜ່ຂະຫຍາຍໃນຕົວເມືອງໄປຮອດເຂດຊົນນະບົດ ຊຶ່ງໄດ້ຮັບການຢັ້ງຢືນຈາກການສຳຫຼວດຕົວຢ່າງນຳປັດສະວະຂອງຈຳນວນນັກຮຽນ 14.260 ຄົນ ຈາກ 99 ໂຮງຮຽນ ຢູ່ 17 ແຂວງ. ຈາກການສຳຫຼວດໃນປີ 2003 ໄດ້ພົບວ່າ 3,7% ໂດຍສະເລ່ຍຂອງນັກຮຽນທີ່ມີຄວາມສ່ຽງສູງ ແມ່ນໄດ້ທົດລອງເສບຢາບ້າເຊິ່ງມາຮອດປີ 2005 ຍັງມີຄວາມສ່ຽງ

ສູງໄດ້ເພີ່ມຂຶ້ນຕື່ມອີກຫຼາຍພໍສົມຄວນ ຜູ້ທີ່ເຄີຍສູບຝິ່ນບາງຄົນ ແລະ ຜູ້ທີ່ເສບຢາເສບຕິດໃໝ່ໄດ້ເລີ້ມຕົ້ນເສບຢາເສບຕິດຫຼາຍຢ່າງ. ການສຳຫຼວດໂດຍ ກຄສ ຂັ້ນສູນກາງ ແລະ ອົງການ ສປຊ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກຳ ໃນບໍ່ດົນນີ້ໄດ້ໃຫ້ຮູ້ຢູ່ໃນ 3 ແຂວງຊາຍແດນພາກເໜືອ, 2.8% ຂອງບ້ານເຂດພູດອຍ ໄດ້ຊົມໃຊ້ເຮໂລອິນ ຊຶ່ງໃນນັ້ນ 4% ແມ່ນໄດ້ນຳໃຊ້ດ້ວຍການສັກເຂົ້າເສັ້ນເລືອດ.

ນັບຕັ້ງແຕ່ປີ 2007ເປັນຕົ້ນມາ, ການແຜ່ຂະຫຍາຍການຊົມໃຊ້ຢາເສບຕິດຢູ່ພາຍໃນປະເທດການເຮັດໃຫ້ເກີດມີການກໍ່ອາຊະຍະກຳ ແລະ ບາງຄັ້ງກໍມີເຖິງຂັ້ນຮຸນແຮງ. ຍ້ອນວ່າ ສປປ ລາວມີຊາຍແດນຕິດຈອດກັບຫຼາຍໆປະເທດທີ່ມີການຕິດເຊື້ອ ເອດຈ ໄອ ວີ/ເອດສ ແລະ ການເສບຢາເສບຕິດແມ່ນຈະໄວກວ່າປົກກະຕິ. ສະພາບການເພີ່ມຂຶ້ນຂອງການຊົມໃຊ້ຢາເສບຕິດໃໝ່ ເປັນຕົ້ນແມ່ນຢາບ້າໃນ ສປປ ລາວ ໄດ້ເຮັດໃຫ້ປະເທດຊາດ ປະເຊີນໜ້າກັບການເພີ່ມຂຶ້ນຂອງການສໍ້ລາດບັງຫຼວງ, ການຟອກເງິນ ແລະ ບັນຫາການກໍ່ອາຊະຍາກຳອື່ນໆອີກ. ສິ່ງເຫຼົ່ານີ້ມັນໄດ້ຂົ່ມຂູ່ ຄວາມໝັ້ນຄົງ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ໃນ ສປປ ລາວ ແລະ ມັນຈະແຕະຕ້ອງ ແລະ ກີດໜ່ວງການພັດທະນາເສດ

ອາດຊະຍາກຳທີ່ຕິດພັນກັບບັນຫາຢາເສບຕິດ



Source: UNDSS

ຖະກິດ-ສັງຄົມຂອງຊາດ. ເພື່ອແກ້ໄຂບັນຫາດັ່ງກ່າວ, ສິ່ງສຳຄັນທີ່ສຸດແມ່ນຕ້ອງ ໄດ້ເສີມສ້າງຄວາມສາມາດ ແລະ ສ້າງສະຖາບັນການຈັດຕັ້ງໃຫ້ເຂັ້ມແຂງ. ມັນ ມີຄວາມຈຳເປັນຕ້ອງໄດ້ຍົກລະດັບການພັດທະນາຊັບພະຍາກອນມະນຸດ, ດ້ານ ການຍຍະພາບ ແລະ ດ້ານວິຊາການໃນທົ່ວຈາກຂະແໜງການລວມມີຄື: ເຈົ້າໜ້າ ທີ່ປະຕິບັດມາດຕະການກົດໝາຍ, ໄອຍະການ, ທະນາຍຄວາມ, ຜູ້ພິພາກສາ, ພະນັກງານແພດໝໍ ແລະ ນັກວິທະຍາສາດອື່ນໆ.

ຍ້ອນມີການຂາດຜູ້ພິພາກສາ, ຫຼາຍຄະດີຢາເສບຕິດ ໄດ້ພະຍາຍາມຕັດສິນກ່ອນ ການພິພາກສາ ຈາກສານອື່ນໆ ເຊັ່ນ : ສານຄອບຄົວ ຫຼື ສານໄກ່ເກ່ຍ ຂັ້ນບ້ານ ທີ່ບໍ່ ຄ່ອຍເຂົ້າໃຈກ່ຽວກັບບັນຫາຢາເສບຕິດ. ໃນພາກຕົວຈິງແລ້ວ ບໍ່ພຽງແຕ່ຜູ້ພິພາກ ສາທີ່ບໍ່ມີຄວາມຮູ້ກ່ຽວກັບບັນຫາຢາເສບຕິດ, ແມ່ນແຕ່ພົນລະເມືອງລາວຫຼາຍຄົນ ກໍຍັງບໍ່ເຂົ້າໃຈລັກສະນະ ແລະ ໄພອັນຕະລາຍຂອງຢາເສບຕິດ ແລະ ສານເຄມີ ຊະນິດໃໝ່ອື່ນໆອີກທີ່ກຳລັງເຂົ້າມາສູ່ທ້ອງຕະຫຼາດຂອງລາວ.

ການປິ່ນປົວຜູ້ຕິດຢາເສບຕິດທຸກປະເພດແມ່ນສິ່ງທີ່ກຳລັງທ້າທາຍ. ການຕິດຢາ ແມ່ນພະຍາດທາງສະໝອງ ຊຶ່ງເຮັດໃຫ້ມີຄວາມສັບສົນ ຍ້ອນມີການຕິດຄືນແບບ ຊຳເຮື້ອ ແລະ ມີປັດໄຈດ້ານຮ່າງກາຍສັບສົນ, ປັດໄຈດ້ານສັງຄົມ, ເສດຖະກິດ ແລະ ກົດໝາຍອື່ນໆ. ດັ່ງນັ້ນ, ຕ້ອງມີມາດຕະການຕ່າງໆ ເພື່ອພັດທະນາໂດຍ ໃຫ້ຊຸມຊົນມີສ່ວນຮ່ວມທີ່ມີປະສິດທິຜົນເພີ່ມຂຶ້ນ ແລະ ສາມາດແກ້ໄຂບັນຫາທີ່ຈະ ເອື້ອອຳນວຍໃຫ້ເກີດມີການຕິດຢາເສບຕິດ.

ສິ່ງທີ່ໜ້າເປັນຫ່ວງອີກອັນໜຶ່ງນັ້ນກໍຄືບັນຫາການປູກກັນຊາ ໃນເຂດຫ່າງໄກສອກ ຫຼີກຢູ່ບາງແຂວງພາກກາງຂອງລາວ. ສ່ວນຫຼາຍແມ່ນພວກກຸ່ມຄົນບໍ່ດີຈາກພາຍ ນອກປະເທດເຂົ້າມາຊັກຊວນ ແລະ ສົ່ງເສີມໃຫ້ຊາວກະສິກອນລາວລັກລອບປູກ ກັນຊາເພື່ອຂາຍໃຫ້ພວກເຂົາ.

ທັງໝົດນີ້ໄດ້ຊີ້ໃຫ້ເຫັນວ່າ ການກໍ່ອາຊະຍາກຳຂ້າມຊາດແບບມີການຈັດຕັ້ງ ໄດ້ ເລັ່ງໃສ່ ສປປ ລາວ ເພື່ອເປັນທາງຜ່ານໃນການຄ້າຂາຍ ແລະ ລຳລ່ຽງຂົນສົ່ງຢາ ເສບຕິດຜິດກົດໝາຍ, ນອກຈາກນີ້, ການກໍ່ອາຊະຍາກຳທີ່ກ່ຽວຂ້ອງກັບຢາເສບຕິດ ຍັງເຮັດໃຫ້ມີການສ່ຽງດ້ານການສໍ້ລາດບັງຫຼວງ ແລະ ສິ່ງທ້າທາຍຕໍ່ລະບຽບກົດ ໝາຍຕ່າງໆເພີ່ມຂຶ້ນ. ນອກນັ້ນ, ໃນບ່ອນທີ່ມີການກໍ່ອາຊະຍາກຳຂ້າມຊາດແບບມີ ການຈັດຕັ້ງສະພາບຄວາມອຸ້ນອາຍ, ຄວາມບໍ່ໝັ້ນຄົງ ແລະ ປອດໄພຢູ່ໃນຂົງເຂດ ອື່ນໆກໍອາດຈະເກີດຂຶ້ນໃນລະດັບໃດໜຶ່ງ.

ເພື່ອແກ້ໄຂຄວາມສັບສົນເຫຼົ່ານີ້ມັນຮຽກຮ້ອງໃຫ້ມີວິທີການຫຼາຍໆຢ່າງທີ່ຈະຕ້ອງປະຕິບັດໂດຍມີການຮ່ວມມືລະຫວ່າງລັດຖະບານ ແຫ່ງ ສປປ ລາວ ກັບບັນດາປະເທດ, ບັນດາອົງການຈັດຕັ້ງສາກົນກໍຄືອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs). ມີແຕ່ວິທີດຽວນັ້ນກໍຄື ລັດຖະບານ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ(NGOs), ແລະ ຊຸມຊົນຕ່າງໆ ຕ້ອງໄດ້ເຮັດວຽກຮ່ວມກັນ, ຈຶ່ງສາມາດຜ່ານຜ່າກັບໄພຂົ່ມຂູ່ຂອງຢາເສບຕິດນີ້ໄດ້.

ຍຸດທະສາດ ແລະ ແຜນງານແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ:

ສະພາບຢາເສບຕິດຢູ່ ສປປ ລາວ ມີຄວາມສັບສົນເພີ່ມຂຶ້ນ ດັ່ງຈະເຫັນໄດ້ຈາກການສ້າງແຜນແມ່ບົດວ່າດ້ວຍການຄວບຄຸມຢາເສບຕິດຄືດັ່ງລຸ່ມນີ້:

1. ປີ 1994-2000: ໄດ້ມີແຜນງານແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ (ວ່າດ້ວຍການຄວບຄຸມຢາເສບຕິດແບບດຸ່ນດ່ຽງເທື່ອລະກ້າວ ໂດຍເນັ້ນໜັກໃສ່ການພັດທະນາທາງເລືອກແທນ)

2. ປີ 2000-2006: ໄດ້ມີແຜນງານລົບລ້າງການປູກຝິ່ນແບບດຸ່ນດ່ຽງ (ວ່າດ້ວຍການພັດທະນາທາງເລືອກແທນ, ການຫຼຸດຜ່ອນການຊົມໃຊ້ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍ)

3. ປີ 2006-2009: ໄດ້ມີແຜນງານແຫ່ງຊາດເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນພາຍຫຼັງຢຸດເຊົາການປູກຝິ່ນ ແລະ ແຜນປະຕິບັດງານໄດ້ເລັ່ງໃສ່ 1,100 ບ້ານບູລິມະສິດ ທີ່ທຸກຍາກທີ່ສຸດ (ໂດຍເນັ້ນໃສ່ການພັດທະນາທາງເລືອກແທນ, ການຫຼຸດຜ່ອນການຊົມໃຊ້, ການປູກຈິດສຳນຶກ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍຕິດພັນກັບແຜນງານຫຼຸດຜ່ອນຄວາມທຸກຈົນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດເທື່ອທີ 6)

4.2009-2013: ມີແຜນແມ່ບົດແຫ່ງຊາດວ່າດ້ວຍການຄວບຄຸມຢາເສບຕິດ(ແຜນຮອບດ້ານ). ແຜນແມ່ບົດແຫ່ງຊາດວ່າດ້ວຍການຄວບຄຸມຢາເສບຕິດນີ້ ຈະໃຫ້ທິດທາງນະໂຍບາຍແກ່ຄະນະຊີ້ນຳຂະບວນຕ້ານຢາເສບຕິດແຫ່ງຊາດ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ ແຫ່ງ ສປປ ລາວ ໃນເດືອນ ຕຸລາ 2001.

ຄະນະຊີ້ນຳຂະບວນການ ຕ້ານຢາເສບຕິດແຫ່ງຊາດນີ້ປະກອບມີ ທ່ານ ນາຍົກລັດຖະມົນຕີ, ເປັນປະທານ, ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ, ເປັນຮອງປະທານ, ທ່ານ ລັດຖະມົນຕີປະຈຳສຳນັກງານປະທານປະເທດ ທັງເປັນ

ປະທານ ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ (ຄະນະ ກຄສ ຂັ້ນສູນກາງ), ເປັນປະທານ, ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນປະເທດ, ທ່ານລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ, ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ເປັນກຳມະການ.

ພາກສ່ວນທີ່ນຳພາການຈັດຕັ້ງປະຕິບັດແຜນແມ່ບົດ ແຫ່ງຊາດວ່າດ້ວຍການຄວບຄຸມຢາເສບຕິດແມ່ນ ຄະນະ ກຄສ ຂັ້ນສູນກາງ. ກົດໝາຍວ່າດ້ວຍຢາເສບຕິດ ທີ່ປະກາດໃຊ້ ໃນປີ 2008 ໄດ້ມອບໝາຍໃຫ້ ຄະນະ ກຄສ ຂັ້ນສູນກາງ ໃຫ້ເປັນການຈັດຕັ້ງລະດັບຊາດ, ເປັນເສນາທີ່ການໃຫ້ລັດຖະບານແຫ່ງ ສປປ ລາວ ໃນການກວດກາ ແລະ ຄວບຄຸມຢາເສບຕິດ ຢ່າງລວມສູນເປັນເອກະພາບໃນທົ່ວປະເທດ ທີ່ມີໜ້າທີ່ຮັບຜິດຊອບ ໃນການປະສານງານກິດຈະກຳຕ່າງໆ ກ່ຽວກັບການກວດກາ ແລະ ຄວບຄຸມຢາເສບຕິດ ຮ່ວມກັບຂະແໜງການອື່ນໆ ທີ່ມີຄວາມຮັບຜິດຊອບ ຢູ່ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງການເງິນ, ກະຊວງຍຸຕິທຳ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ, ອົງການ ໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຫ້ອງການຄະນະ ກຄສ ຂັ້ນສູນກາງ ທີ່ປັບປຸງຄືນໃໝ່ນີ້ ປະກອບມີ 5 ພະແນກ ຄື: ພະແນກ ຈັດຕັ້ງ; ບໍລິຫານ ແລະ ການເງິນ; ພະແນກ ແຜນການ ແລະ ການຮ່ວມມື; ພະແນກ ຄວບຄຸມການສະໜອງ ແລະ ຄວາມຕ້ອງການພືດມີສານເສບຕິດ; ພະແນກ ຫຼຸດຜ່ອນຄວາມຕ້ອງການຢາເສບຕິດພະເພດຕ່າງໆ ແລະ ພະແນກ ປະຕິບັດການທາງດ້ານກົດໝາຍ. ແຜນແມ່ບົດ ດັ່ງກ່າວ ໄດ້ຮຽກຮ້ອງໃຫ້ ຄະນະ ກຄສ ຂັ້ນສູນກາງ, ພະນັກງານຂອງກະຊວງ ແລະ ອົງການຕ່າງໆ ທີ່ກ່ຽວຂ້ອງ ໃນຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ ເພື່ອແກ້ໄຂບັນຫາຢາເສບຕິດ ທີ່ເກີດຂຶ້ນແຕ່ດົນມາແລ້ວ ແລະ ທີ່ເກີດຂຶ້ນໃໝ່ໃຫ້ມີປະສິດທິພາບ ແລະ ທັນການ.

ແຜນຍຸດທະສາດຄວບຄຸມຢາເສບຕິດ :

ກົດໝາຍວ່າດ້ວຍຢາເສບຕິດແຫ່ງຊາດສະບັບທຳອິດ ໄດ້ກຳນົດໂຄງສ້າງ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກຳທີ່ກ່ຽວຂ້ອງກັບຢາເສບຕິດ. ກົດໝາຍ

ດັ່ງກ່າວ ໄດ້ກຳນົດໜ້າທີ່ຄວາມຮັບຜິດຊອບຂອງຂະແໜງການຕ່າງໆ ຊຶ່ງລວມມີ ຂະແໜງການຂອງລັດ, ຂອງສັງຄົມ, ຂອງຄອບຄົວ ແລະ ສ່ວນບຸກຄົນ. ການກຳ ອາຊະຍາກຳທີ່ກ່ຽວຂ້ອງເຊັ່ນ: ການສໍ້ໂກງກໍໄດ້ກຳນົດໄວ້, ມີການເນັ້ນໜັກໃສ່ ການຮ່ວມມືກັບສາກົນ. ກົດໝາຍດັ່ງກ່າວ ໄດ້ເພີ່ມບົດບາດຂອງ ກຄສ ຂັ້ນສູນ ກາງໃນຖານະທີ່ເປັນອົງການຈັດຕັ້ງແຫ່ງຊາດຮັບຜິດຊອບປະສານງານການ ຄວບຄຸມຢາເສບຕິດ.

ເພື່ອຈັດຕັ້ງປະຕິບັດກົດໝາຍດັ່ງກ່າວນັ້ນ, ກຄສ ສູນກາງໂດຍໄດ້ຮັບການສະໜັບ ສະໜູນຊ່ວຍເຫຼືອຈາກອົງການ ສປຊ ເພື່ອຄວບຄຸມຢາເສບ ແລະ ຕ້ານອາດຊະ ຍາກຳໄດ້ສ້າງແຜນແມ່ບົດແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ ສະບັບ ທຳອິດຂຶ້ນຊຶ່ງເປັນແຜນທີ່ມີລັກສະນະກວມລວມເອົາ 9 ແຜນງານຊຶ່ງໃນນັ້ນ 3 ແຜນງານ ແມ່ນຈະໄດ້ປະຕິບັດຮ່ວມກັບທຸກແຜນງານອື່ນ. ຈຸດປະສົງ ແລະ ກິດ ຈະກຳຕ່າງໆຂອງ 9 ແຜນງານ ໄດ້ກ່າວໄວ້ຄືດັ່ງຕໍ່ໄປນີ້:

1. ການວິເຄາະທ່າອ່ຽງ ແລະ ການປະເມີນຄວາມສ່ຽງຂອງຢາເສບຕິດ

ຈຸດປະສົງ: ເພື່ອຕິດຕາມການຜະລິດ, ການຊົມໃຊ້ ແລະ ການຄ້າຂາຍຢາເສບຕິດ ທີ່ຈະເປັນຂໍ້ມູນ ແລະ ເປັນບ່ອນອີງໃນການສ້າງຍຸດທະສາດວຽກງານການຄວບ ຄຸມຢາເສບຕິດໄດ້ຢ່າງມີປະສິດທິຜົນ.

ຍ້ອນມີການປ່ຽນແປງສະພາບຢາເສບຕິດຢູ່ ສປປລາວ, ມັນຮຽກຮ້ອງໃຫ້ມີລະບົບ ເກັບກຳຂໍ້ມູນແບບລວມສູນ. ຂໍ້ມູນກ່ຽວກັບການຜະລິດ, ການຊົມໃຊ້, ການຄ້າຂາຍ ຢາເສບຕິດ, ການຈັບກຸມ ແລະ ປະເພດສານເສບຕິດຕ່າງໆ ຕ້ອງໄດ້ສັງລວມ ໄວ້ເພື່ອເປັນບ່ອນອີງໃນການຕິດຕາມການປ່ຽນແປງ ແລະ ວັດແທກຜົນກະທົບ ແລະ ເພື່ອສ້າງແຜນລ່ວງໜ້າ ແລະ ຕອບໂຕ້ຢ່າງມີປະສິດທິຜົນ ແລະ ທັນການ.

ກິດຈະກຳ:
- ຈັດຕັ້ງການເຝິກອົບຮົມກ່ຽວກັບວິທີການສຶບສວນ ແລະ ເກັບກຳຂໍ້ມູນ, ໂດຍສະເພາະຢູ່ຂັ້ນແຂວງ ແລະ ຂັ້ນເມືອງ. - ປັບປຸງສິ່ງອຳນວຍຄວາມສະດວກ ເພື່ອຄຸ້ມຄອງຕາໜ່າງການເກັບກຳຂໍ້ມູນ.
ໂຕຊີ້ວັດ:
- ການເກັບກຳຂໍ້ມູນຮອບດ້ານກ່ຽວກັບຢາເສບຕິດທັງໝົດ ແລະ ການກໍ່ອາຊະຍາກຳທີ່ກ່ຽວ ຂ້ອງໄດ້ຮັບການຈັດຕັ້ງປະຕິບັດ.
ຜົນຈະໄດ້ຮັບ:
- ໄດ້ຈັດຕັ້ງປະຕິບັດຂັ້ນຕອນຕ່າງໆໃນການປະເມີນຄວາມສ່ຽງ ໂດຍມີການຄາດຄະເນທ່າ ອ່ຽງຂອງຢາເສບຕິດ ແລະ ໄດ້ກະກຽມຫຼັກສູດການປະຕິບັດ.

ຄູ່ຮ່ວມງານແຫ່ງຊາດລະດັບກະຊວງ:
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດ), ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ

2. ການພັດທະນາເພື່ອທົດແທນການປູກຝິ່ນ ແລະ ຫຼຸດຜ່ອນຄວາມທຸກຈົນ

ຈຸດປະສົງ: ເພື່ອປ້ອງກັນຄວາມຕ້ອງການດ້ານເສດຖະກິດຈາກການຜະລິດຝິ່ນ, ແລະ ແກ້ໄຂຄວາມຕ້ອງການພິເສດຂອງຊຸມຊົນທີ່ກ່ຽວຂ້ອງ.

ການພັດທະນາເພື່ອທົດແທນການປູກຝິ່ນຢູ່ ສປປ ລາວ ແມ່ນການແກ້ໄຂຄວາມຕ້ອງການພິເສດ ແລະ ສະເພາະຂອງຊຸມຊົນທີ່ເຄີຍປູກພືດເສບຕິດຜິດກົດໝາຍ (ໂດຍສະເພາະຝິ່ນ) ແລະ ການຊົມໃຊ້ຝິ່ນ. ການພັດທະນາເພື່ອທົດແທນການປູກຝິ່ນ ຍັງລວມເຖິງການນຳໃຊ້ມາດຕະການປ້ອງກັນທີ່ຈຳເປັນນຳອີກ. ມີການຄ້າຂາຍຢາເສບຕິດຂ້າມຊາດ ແບບມີການຈັດຕັ້ງເພີ່ມຂຶ້ນຜ່ານເຂດຊາຍແດນໃດໜຶ່ງ ແລະ ມີການຊົມໃຊ້ຢາເສບຕິດຫຼາຍປະເພດ ຢູ່ໃນຊຸມຊົນບັນດາເຜົ່າທີ່ດ້ອຍໂອກາດຜູ້ທີ່ເຄີຍປູກຝິ່ນ. ອັນນີ້ມັນຮຽກຮ້ອງໃຫ້ມີວິທີການອັນແນບນຽນ ເພື່ອແກ້ໄຂສະພາບຄວາມຫຍຸ້ງຍາກ ແລະ ສັບສົນໃນເຂດພູດອຍດັ່ງກ່າວ.

ໃນເດືອນສິງຫາ 2006, ໄດ້ມີການສະເໜີແຜນຍຸດທະສາດແຫ່ງຊາດ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນພາຍຫຼັງຢຸດເຊົາການປູກຝິ່ນຢູ່ ສປປ ລາວ ໂດຍມີແຜນປະຕິບັດໃນເປົ້າໝາຍ 1,100 ບ້ານທຸກຍາກທີ່ເຄີຍປູກຝິ່ນ. ການພັດທະນາເພື່ອທົດແທນການປູກຝິ່ນ ຈະສຸ່ມໃສ່ 32 ເມືອງທີ່ນອນຢູ່ໃນ 47 ເມືອງທີ່ທຸກຍາກທີ່ສຸດຕາມທີ່ກຳນົດໄວ້ໃນຍຸດທະສາດການເຕີບ ແລະ ການລຶບລ້າງຄວາມທຸກຍາກແຫ່ງຊາດ. ສປປ ລາວ ມີແຜນທີ່ຈະໃຫ້ການສະໜັບສະໜູນຊ່ວຍເຫຼືອຢ່າງພຽງພໍໃນໄລຍະຫ້ວຽງຫ້ວຽງຕໍ່ ພາຍຫຼັງຢຸດເຊົາການປູກຝິ່ນ ຊຶ່ງເປັນໄລຍະທີ່ຕ້ອງໃຫ້ການຊ່ວຍເຫຼືອເພື່ອເຮັດໃຫ້ການລຶບລ້າງການປູກຝິ່ນມີຄວາມຍືນຍົງ.

ໃນເວລາດຽວກັນກໍຕ້ອງໄດ້ແກ້ໄຂຄວາມຕ້ອງການເປັນກໍລະນີພິເສດຂອງຊຸມຊົນທີ່ໄດ້ຮັບຜົນກະທົບຕໍ່ບັນຫາດັ່ງກ່າວ.

ກິດຈະກຳ
- ສ້າງແຜນພັດທະນາລວມ ເພື່ອທົດແທນການປູກຝິ່ນແຫ່ງຊາດ ໂດຍໃຫ້ມີສູນຈັດຕັ້ງປະຕິບັດໃນລະດັບເມືອງທີ່ແຂງແຮງ, - ສ້າງກອງທຶນພັດທະນາ ເພື່ອທົດແທນການປູກຝິ່ນ ເພື່ອສະໜອງສິນເຊື່ອ ນຳໃຊ້ເຂົ້າໃນການດຳລົງຊີວິດທີ່ເໝາະສົມ ແລະ ສ້າງລາຍຮັບໃຫ້ຊຸມຊົນທີ່ເຄີຍປູກຝິ່ນ; - ປະກອບພະນັກງານວິຊາສະເພາະໃນດ້ານຕ່າງໆໃຫ້ສູນຂັ້ນເມືອງເຊັ່ນ: ດ້ານສິນເຊື່ອ, ດ້ານການສ້າງລາຍຮັບ, ດ້ານການປິ່ນປົວຜູ້ຕິດຢາເສບຕິດ.

ໂຕຊີ້ວັດ

- ວຽກງານພັດທະນາເພື່ອທົດແທນການປູກຝິ່ນ ໄດ້ຕິດພັນກັບເປົ້າໝາຍພັດທະນາສະຫັດສະວັດ ແລະ ແຜນງານເຕີບໂຕດ້ານເສດຖະກິດແຫ່ງຊາດ ເພື່ອຈັດຕັ້ງປະຕິບັດຮ່ວມກັບວຽກງານຄູ່ຮ່ວມພັດທະນາອື່ນໆ ຈາກທັງພາຍໃນ ແລະ ຈາກສາກົນ.

ຜົນຈະໄດ້ຮັບ

- ວຽກພັດທະນາເພື່ອທົດແທນການປູກຝິ່ນ ໄດ້ເສື່ອມໂຍງກັບແຜນງານແຫ່ງຊາດອື່ນໆ ແລະ ມີການຮັບປະກັນຄວາມຍືນຍົງໃນການລົບລ້າງການປູກຝິ່ນ.

ຄູ່ຮ່ວມງານແຫ່ງຊາດລະດັບກະຊວງ:

ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ອຳນາດການປົກຄອງແຂວງ ແລະ ເມືອງ

Alternative Development Programme Modules and ensuing sub-projects



ແຜນງານຮ່ວມສະໜັບສະໜຸນໂດຍ ອົງການ UNODC/ UNIDO ຢູ່ພາກຕາເວັນຕົ້ນສ່ຽງເໜືອຂອງ ສປປ ລາວ

- ໂຄງການກຳລັງດຳເນີນຢູ່
- ໂຄງການກຳລັງດຳເນີນຢູ່ ແຕ່ຕ້ອງການສືບຕໍ່
- ເຂດໂຄງການເປົ້າໝາຍທີ່ເປັນບູລິມະສິດໃນອານາຄົດ

ແຂວງ ເປົ້າໝາຍ: 4
ເມືອງ ເປົ້າໝາຍ: 9
ລວມ ບ້ານ ເປົ້າໝາຍ: 162
ມູນຄ່າລວມ: 18,000,000 USD

ແຜນງານ ສະໜັບສະໜຸນໂດຍ ອົງການ UNODC ຢູ່ພາກຕາເວັນອອກສ່ຽງເໜືອຂອງ ສປປ ລາວ

- ໂຄງການກຳລັງດຳເນີນຢູ່
- ໂຄງການກຳລັງດຳເນີນຢູ່ ແຕ່ຕ້ອງການສືບຕໍ່
- ເຂດໂຄງການເປົ້າໝາຍທີ່ເປັນບູລິມະສິດໃນອານາຄົດ

ແຂວງ ເປົ້າໝາຍ: 2
ເມືອງ ເປົ້າໝາຍ: 3
ລວມ ບ້ານ ເປົ້າໝາຍ: 274
ມູນຄ່າລວມ: 15,000,000 USD

ຕາຕະລາງຂ້າງລຸ່ມນີ້ ໄດ້ກຳນົດເອົາ 18 ເມືອງບູລິມະສິດ ທີ່ຕ້ອງການຊ່ວຍເຫຼືອ ແລະ ເປັນເມືອງທີ່ມີຄວາມສ່ຽງຈະກັບມາປູກຝິ່ນຄືນຫຼາຍທີ່ສຸດມີດັ່ງນີ້:

ລດ	ແຂວງ	ເມືອງ	ບ້ານ	ມູນຄ່າ (ລ້ານໂດລາ)
1.	ຜົ້ງສາລີ	ຍອດອູ	39	
2.		ສຳພັນ	35	3
3.	ອຸດົມໄຊ	ນາໝໍ້/ງາ	37+15	5
4.	ຫຼວງນ້ຳທາ	ວຽງພູຄາ/ນາແລ	12+6	2
5.	ຫົວພັນ	ຊຳໃຕ້ ໄລຍະ II	155	7
6.		ວຽງທອງ	64	4
7.		ວຽງໄຊ/ສົບເບົາ	32+27	4
8.	ຊຽງຂວາງ	ຄູນ	55	4
9.	ຫຼວງພະບາງ	ໂພນໄຊ	16	3
10.	ບໍ່ແກ້ວ	ເມິງ/ຫ້ວຍອຸດົມ	9	2
11.	ວຽງຈັນ	ໄຊສົມບູນ/ຮົ່ມ	10+22	3
12.	ບໍລິຄຳໄຊ	ຄຳເກີດ/ວຽງທອງ	10+13	2
ລວມ	9 ແຂວງ	18 ເມືອງ	557	44

3. ການຫຼຸດຜ່ອນຄວາມຕ້ອງການໃນການຊົມໃຊ້ຢາເສບຕິດ ແລະ ການປ້ອງກັນໂລກເອດຈໄອວີ/ເອດສ

ຈຸດປະສົງ: ເພື່ອຫຼຸດຜ່ອນການຊົມໃຊ້ຢາເສບຕິດ, ການແຜ່ລະບາດເຊື້ອເອດຈໄອວີ/ເອດສ ແລະ ອັນຕະລາຍຈາກທັງສອງຢ່າງ: ເພື່ອແກ້ໄຂບັນຫາດັ່ງກ່າວ ຈະໄດ້ສຸມໃສ່ 6 ວິທີການດັ່ງຕໍ່ໄປນີ້:

1. ການສ້າງລະບົບເກັບກຳຂໍ້ມູນຂ່າວສານທີ່ມີປະສິດທິພາບ, ຂໍ້ມູນກ່ຽວກັບການຊົມໃຊ້ຢາເສບຕິດ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງລວມທັງການສັກຢາເສບຕິດເຂົ້າເສັ້ນເລືອດ, ເຊື້ອເອັດຈໄອວີ/ເອດສ ແລະ ການປະເມີນຜົນກະທົບດ້ານນະໂຍບາຍ ແລະ ການຊ່ວຍເຫຼືອຕ່າງໆ.

2. ການສ້າງໃຫ້ມີການຕອບໂຕ້ຈາກຊຸມຊົນ ຊຶ່ງລວມມີຫຼາຍວິທີການທີ່ພົວ

ພັນຊື່ງກັນ ແລະ ກັນ ໂດຍມີຈຸດປະສົງສ້າງໃຫ້ຜູ້ທີ່ກ່ຽວຂ້ອງທີ່ສຳຄັນມີຄວາມຮູ້ກ່ຽວກັບຢາເສບຕິດໃຫ້ດີຂຶ້ນ. ຕໍ່ກັບບັນຫານີ້ ລວມມີຍຸດທະສາດຕ່າງໆ ເພື່ອໃຫ້ແນໃສ່ກຸ່ມຄົນທີ່ດ້ອຍໂອກາດ, ລວມທັງຜູ້ໄດ້ກາຍເປັນແລ້ວ ຫຼື ຢູ່ໃນຄວາມສ່ຽງທີ່ຈະຖືກແບ່ງແຍກອອກຈາກໂຮງຮຽນ/ຊຸມຊົນ ແລະ ຈະໄດ້ເອົາມາຕິດພັນກັບກິດຈະກຳທີ່ກ່ຽວຂ້ອງກັບການປ້ອງກັນຢາເສບຕິດຕ່າງໆຢູ່ໃນໂຮງຮຽນ.

3. ການໃຫ້ຂໍ້ມູນ ແລະ ການແນະນຳແກ່ສະມາຊິກຂອງຊຸມຊົນ/ພໍ່ແມ່, ການເຂົ້າໄປຊ່ວຍເຫຼືອຜູ້ຊົມໃຊ້ຢາເສບຕິດແຕ່ຫົວທີ ແລະ ສະໜັບສະໜູນດ້ານວິຊາການ ໂດຍຜ່ານສູນໂທລະສັບ ເພື່ອໃຫ້ຄຳແນະນຳ, ຂໍ້ມູນຂ່າວສານ ແລະ ການສົ່ງຕໍ່ໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກຢາເສບຕິດ. ການບໍລິການດັ່ງກ່າວ ຈະສາມາດປະກອບສ່ວນເຂົ້າໃນລະບົບເຕືອນໄພລ່ວງໜ້າ ກ່ຽວກັບຮູບແບບການປ່ຽນແປງ ການຊົມໃຊ້ຢາເສບຕິດ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງໄປພ້ອມໆກັນ.

4. ການປະຕິບັດຍຸດທະສາດ ເພື່ອແກ້ໄຂຄວາມຕ້ອງການຂອງຜູ້ສູງອາຍຸທີ່ຕິກເປັນທາດຂອງຢາເສບຕິດ.

5. ປັບປຸງຄຸນນະພາບຂອງການບຳບັດ-ປິ່ນປົວ ແລະ ສ້າງຄວາມອາດສາມາດໃນການບໍລິການທາງດ້ານການແພດ ແລະ ທາງດ້ານສຸຂະພາບຈິດ ເພື່ອແກ້ໄຂບັນຫາຢາເສບຕິດ.

6. ການທົດລອງແກ້ໄຂບັນຫາຢາເສບຕິດ ແບບກ້າວຂວາງ ໃນໝູ່ຊາວໜຸ່ມ ລວມທັງການແກ້ໄຂບັນຫາຢາເສບຕິດຕາມສະຖານທີ່ຕ່າງໆ, ການປິ່ນປົວເວລາມຶນເມົາ ແລະ ການຖອນພິດຢາຢູ່ໃນຊຸມຊົນ; ການຟື້ນຟູ ໂດຍວິທີການສຶກສາ ແລະ ວິຊາຊີບ, ການໃຫ້ການສະໜັບສະໜູນ ແລະ ການຟື້ນຟູ ໂດຍຊຸມຊົນມີສ່ວນຮ່ວມ.

ກິດຈະກຳ:

- ສ້າງທີມປະສານງານການຕິດຕາມ ແລະ ປະເມີນຜົນ
- ສ້າງທີມຂໍ້ມູນຂ່າວສານ ແລະ ການສຶກສາ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານກ່ຽວກັບຂໍ້ມູນຂ່າວສານ/ການສຶກສາ ເພື່ອປ້ອງກັນ ແລະ ຫຼຸດຜ່ອນການຊົມໃຊ້ຢາເສບຕິດ ແລະ ບັນຫາຕ່າງໆ ທີ່ກ່ຽວຂ້ອງກັບຢາເສບຕິດ
- ສ້າງທີມທົດລອງ ເພື່ອພັດທະນາຄວາມຮູ້ ແລະ ຄວາມຊຳນິຊຳນານຂອງຜູ້ນຳຊຸມຊົນ ເພື່ອເສີມຂະຫຍາຍຄວາມສາມາດຂອງເຂົາເຈົ້າໃຫ້ສາມາດປ້ອງກັນ ແລະ ຫຼຸດຜ່ອນການຊົມໃຊ້ຢາເສບຕິດ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງ
- ພັດທະນາ ແລະ ທົດລອງຍຸດທະສາດ ແບບເພື່ອນ-ຊ່ວຍເພື່ອນ ເພື່ອປ້ອງກັນການຊົມໃຊ້ຢາເສບຕິດ ແລະ ເພື່ອຫຼຸດຄວາມສ່ຽງທີ່ຕິດພັນກັບການຊົມໃຊ້ຢາເສບຕິດ ແລະ ອຳນວຍຄວາມສະດວກໃນການເຂົ້າຮັບການບຳບັດ-ປັ່ນປົວ
- ພັດທະນາຄວາມຮູ້ ແລະ ຄວາມຊຳນານຂອງພໍ່ແມ່, ຄູອາຈານ, ແລະ ຜູ້ນຳຂອງຊຸມຊົນ ເພື່ອຈະນຳນິດ ແລະ ຕອບໂຕ້ກັບປັດໄຈຕ່າງໆ ທີ່ເພີ່ມຄວາມສ່ຽງຕໍ່ການຊົມໃຊ້ຢາເສບຕິດ
- ສ້າງຕັ້ງ, ທົດລອງ ແລະ ສະໜັບສະໜຸນ ສູນແຈ້ງຂໍ້ມູນທາງໂທລະສັບແຫ່ງຊາດ
- ໃຫ້ຜູ້ສູບຝິ່ນ ຜູ້ທີ່ບໍ່ຢາກປະຕິບັດຕາມວິທີການໃນປັດຈຸບັນ ເຂົ້າຮ່ວມການບຳບັດ-ປັ່ນປົວ ເພື່ອຫຼຸດຜ່ອນການຕົກເປັນທາດຂອງຢາຝິ່ນ ແລະ ຫຼຸດຜ່ອນຄວາມສ່ຽງຂອງການຊົມໃຊ້ຢາເສບຕິດປະເພດອື່ນໆ, ລວມທັງການຊົມໃຊ້ໂດຍການສັກຢາເຂົ້າທາງເສັ້ນເລືອດ
- ທົດລອງແຜນງານການຖອນພິດຢາ ແລະ ໃຫ້ການຟື້ນຟູສຸຂະພາບໄລຍະສັ້ນຢູ່ກັບສູນ ໃຫ້ຜູ້ທີ່ຕົກເປັນທາດຂອງຢາເສບຕິດ ແລະ ມີຄວາມສ່ຽງສູງ ຈະກັບໄປເສບຢາເສບຕິດຄືນໃໝ່
- ປັບປຸງ, ກໍ່ສ້າງ ແລະ ນຳໃຊ້ສູນບຳບັດ-ປັ່ນປົວທີ່ມີໃນປັດຈຸບັນ ແລະ ຈະກໍ່ສ້າງໃໝ່ ເພື່ອປັ່ນປົວຟື້ນຟູສຸຂະພາບ, ຝຶກວິຊາຊີບ ແລະ ໃຫ້ຄຳປຶກສາແກ່ຜູ້ຕິດຢາເສບຕິດ
- ເສີມສ້າງຄວາມອາດສາມາດ ໃນການບໍລິການທາງດ້ານສຸຂະພາບຈິດ ເພື່ອຕອບສະໜອງໃຫ້ແກ່ຄົນເຈັບທີ່ໄດ້ຮັບຜົນກະທົບຈາກບັນຫາຢາເສບຕິດ, ໂດຍສະເພາະຍ້ອນການຊົມໃຊ້ຢາບ້າ
- ເສີມສ້າງຄວາມເຂົ້າໃຈກ່ຽວກັບການບຳບັດ-ປັ່ນປົວ ແບບໄດ້ຜົນດີ ແລະ ການແກ້ໄຂບັນຫາຢາເສບຕິດ ແລະ ເຊື້ອເອດຈໄອວີ/ເອດສຂອງຊຸມຊົນ
- ພັດທະນາ ແລະ ທົດລອງວິທີການແບບກ້າວໜ້າ ເພື່ອຕອບໂຕ້ກັບບັນຫາຢາເສບຕິດ ແລະ ເຊື້ອເອດຈໄອວີ/ເອດສ

ໂຕຊີ້ວັດ

- ວິທີການບຳບັດ-ປັ່ນປົວ ທີ່ໄດ້ວ່າງອອກສຳລັບບຸກຄົນສະເພາະ ແລະ ດ້ວຍສານເຄມີຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດ

ຜົນຈະໄດ້ຮັບ

- ໄດ້ມີການແກ້ໄຂບັນຫາຢາເສບຕິດ ແລະ ເຊື້ອເອດຈໄອວີ/ເອດສ ແບບກ້າວໜ້າ ໃນໝູ່ຊາວໜຸ່ມ ແລະ ໃນຊຸມຊົນ ແລະ ຈາກການປະຕິບັດວຽກງານດັ່ງກ່າວ ເຮັດໃຫ້ການຊົມໃຊ້ຢາເສບຕິດ ແລະ ເຊື້ອເອດຈໄອວີ/ເອດສ ຢູ່ພາຍໃນປະເທດຫຼຸດລົງ.
- ການບຳບັດ-ປັ່ນປົວຜູ້ຕິດຢາເສບຕິດແບບກ້າວໜ້າ ແລະ ມີປະສິດທິຜົນ ຈະເຮັດໃຫ້ການຕິດຢາເສບຕິດຄືນໃໝ່ຫຼຸດລົງ.

ຄູ່ຮ່ວມງານແຫ່ງຊາດລະດັບກະຊວງ:

ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ແລະ ກະຊວງປ້ອງກັນຄວາມສະຫງົບ, ກະຊວງສຶກສາທິການ.

4. ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ ແລະ ການປຸກລະດົມຊຸມຊົນໃຫ້ເຂົ້າຮ່ວມຕ້ານຢາເສບຕິດ.

ຈຸດປະສົງ: ເພື່ອປຸກຈິດສຳນຶກໃຫ້ຄົນໃນສັງຄົມຮູ້ໄດ້ເຖິງຜົນຮ້າຍ ແລະ ໄພອັນຕະລາຍ ຂອງຢາເສບຕິດປະເພດຕ່າງໆ ແລະ ໃຫ້ເຂົາເຈົ້າໄດ້ຢູ່ຫ່າງໄກ ແລະ ເປັນເຈົ້າການເຂົ້າຮ່ວມໃນການຕ້ານຢາເສບຕິດປະເພດຕ່າງໆ.

ຍ້ອນມີໄພຂົ່ມຂູ່ຈາກຢາເສບຕິດເປັນຕົ້ນແມ່ນຢາບ້າ ໄດ້ແຜ່ຂະຫຍາຍຫຼາຍຢູ່ໃນ ສປປ ລາວ, ລັດຖະບານ ຈະໄດ້ເພີ່ມການສຶກສາອົບຮົມ ແລະ ເຜີຍແຜ່ໂຄສະນາ ຜົນຮ້າຍຂອງ ຢາເສບຕິດ ໂດຍຜ່ານ ການສຶກສາອົບຮົມ ແລະ ເຜີຍແຜ່ດ້ວຍຫຼາຍ ຮູບການ ໂດຍເລັ່ງໃສ່ຊາວໜຸ່ມ - ເຍົາວະຊົນ ເພື່ອປຸກຈິດສຳນຶກໃຫ້ເຂົາເຈົ້າເຫັນ ໄດ້ເຖິງຜົນຮ້າຍ ແລະ ພິດໄພຂອງຢາເສບຕິດ ເພື່ອໃຫ້ເຂົາເຈົ້າບໍ່ຢາກຈະເລີ່ມ ທົດລອງຢາເສບຕິດ. ຄວາມຮູ້ດັ່ງກ່າວ ພ້ອມດ້ວຍການພັດທະນາກິດຈະກຳກິລາ ການຍະກຳ, ກິດຈະກຳສ້າງລາຍຮັບ ແລະ ກິດຈະກຳບັນເທີງຕ່າງໆ ຈະເປັນສິ່ງ ດຶງດູດໃຫ້ຊາວໜຸ່ມຫັນໄປປະຕິບັດກິດຈະກຳທີ່ບໍ່ກ່ຽວຂ້ອງກັບຢາເສບຕິດ.

ກິດຈະກຳ:
- ສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ໃຫ້ກຸ່ມສ່ຽງສະເພາະ ດ້ວຍວິທີການສ້າງຈິດສຳນຶກໃຫ້ເຂົາເຈົ້າຮູ້ໄດ້ເຖິງຜົນຮ້າຍຂອງຢາເສບຕິດ, - ໃຫ້ອົງການຈັດຕັ້ງມະຫາຊົນ, ອົງການທີ່ບໍ່ສັງກັດລັດຖະບານ, ແລະ ອົງການຈັດຕັ້ງອື່ນໆ ເຂົ້າເຖິງຜູ້ຊົມໃຊ້ຢາເສບຕິດ, - ນຳໃຊ້ວິທີການແບບດັ່ງເດີມ ແລະ ລະຄອນພື້ນເມືອງຕ່າງໆທີ່ເໝາະສົມ, ແລະ ປະຕິບັດກິດຈະກຳຕ່າງໆເຊັ່ນ: ການປະກວດ ສິນລະປະດົນຕີ ແລະ ແຂ່ງຂັນກິລາ ເພື່ອເຜີຍແຜ່ໃຫ້ສາທາລະນະຊົນຮູ້ໄດ້ເຖິງເຫດຜົນວ່າ ເປັນຫຍັງຕ້ອງຫຼີກລ້ຽງ ແລະ ຢູ່ຫ່າງໄກຈາກຢາເສບຕິດ;
ໂຕຊີ້ວັດ
- ກິດຈະກຳຕ່າງໆທີ່ເປັນທາງເລືອກຕໍ່ການຊົມໃຊ້ຢາເສບຕິດ ສຳລັບກຸ່ມຄົນທີ່ມີຄວາມສ່ຽງສູງ ຈະຕ້ອງໄດ້ຈັດຕັ້ງປະຕິບັດ.
ຜົນຈະໄດ້ຮັບ:
- ຊາວໜຸ່ມ-ເຍົາວະຊົນ ແລະ ຊຸມຊົນທີ່ມີຄວາມສ່ຽງສູງ ຈະໄດ້ມີການຈັດຕັ້ງປຸກລະດົມ ແລະ ມີການຕ້ານທານຕໍ່ຢາເສບຕິດ ແລະ ສາມາດປ່ຽນແປງພຶດຕິກຳການນຳໃຊ້ຢາເສບຕິດ;
ຄູ່ຮ່ວມແຫ່ງຊາດລະດັບກະຊວງ:
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງສຶກສາທິການ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ກະຊວງປ້ອງກັນຄວາມສະຫງົບ, ອຳນາດການ ປົກຄອງແຂວງ ແລະ ເມືອງ.

5. ການນຳໃຊ້ມາດຕະການທາງດ້ານກົດໝາຍ

ຈຸດປະສົງ: ເພື່ອໃຫ້ ສປປ ລາວໄດ້ມີວິທີການຕ້ານກັບຢາເສບຕິດ.

ສປປ ລາວ ຈະຮັບຮູ້ສະພາບການປ່ຽນແປງຂອງການນຳໃຊ້ຢາເສບຕິດ ໂດຍມີລະບຽບກົດໝາຍ ເພື່ອຕ້ານກັບການຊົມໃຊ້ ແລະ ການຄ້າຂາຍຢາເສບຕິດ. ການເສີມສ້າງຄວາມສາມາດໃຫ້ຂະແໜງການປະຕິບັດມາດຕະການທາງດ້ານກົດໝາຍ, ການເພີ່ມການເຝົ້າລະວັງຕາມຊາຍແດນ ແລະ ຄວາມສາມາດໃນການເກືອດຫ້າມການຄ້າຂາຍສິ່ງເສບ ຕິດຜິດກົດໝາຍ, ພ້ອມທັງສຶບສວນ ແລະ ສອບສວນຄະດີອາຊະຍາກຳ ທີ່ກ່ຽວຂ້ອງກັບຢາເສບຕິດເຊັ່ນ: ການຟອກເງິນກໍ ແມ່ນບັນຫາໜຶ່ງທີ່ເປັນບູລິມະສິດ.

ກິດຈະກຳ:
- ໃຫ້ການເຝິກອົບຮົມກ່ຽວກັບການສະກັດກັ້ນ ແລະ ການສືບສວນ-ສອບສວນທີ່ກ່ຽວຂ້ອງກັບຢາເສບຕິດ - ໃຫ້ການເຝິກອົບຮົມ ດ້ວຍວິທີນຳໃຊ້ຄອມພິວເຕີ ເຂົ້າໃນວຽກງານປະຕິບັດມາດຕະການດ້ານກົດໝາຍ - ໃຫ້ການຝຶກອົບຮົມດ້ານການສືບສວນ-ສອບສວນ, ການຟອກເງິນ ແລະ ຮູບແບບການສໍ້ລາດບັງຫຼວງອື່ນໆ ທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ, - ເພີ່ມຕາໜ່າງຫ້ອງການປະສານງານຕາມຊາຍແດນ, ເສີມສ້າງຄວາມສາມາດໃຫ້ເຂັ້ມແຂງ ເພື່ອສືບສວນ ໂດຍສະເພາະໃນຈຸດປະຕູເຂົ້າ ແລະ ອອກຂອງຢາເສບຕິດ. - ພັດທະນາການທີ່ເໝາະສົມ ເພື່ອປະກອບທຶນ ແລະ ໃຫ້ລາງວັນຕໍ່ບຸກຄົນທີ່ມີຜົນງານໃນການຄວບຄຸມບັນຫາຢາເສບຕິດ ແລະ ຕ້ານອາຊະຍາກຳ. - ສ້າງຖານຂໍ້ມູນລວມສູນ ດ້ານຢາເສບຕິດ ແລະ ຕ້ານອາຊະຍາກຳ. - ເສີມຂະຫຍາຍການຮ່ວມມື ໃນການປະຕິບັດມາດຕະການທາງດ້ານກົດໝາຍຂອງພາກພື້ນ ແລະ ຂອງສາກົນ
ໂຕຊີ້ວັດ:
- ກິດຈະກຳຂອງປະຊາຊົນ ທີ່ມີຄວາມສ່ຽງທີ່ເປັນທາງເລືອກ ເພື່ອທົດແທນຢາເສບຕິດ ໄດ້ປະຕິບັດຫຼາຍຂຶ້ນ, - ຄວາມສາມາດ ໃນການຄວບຄຸມການຂົນສົ່ງເຄມີຕົ້ນ ແລະ ສານເສບຕິດຜິດກົດໝາຍອື່ນໆ ກໍຈະມີປະສິດທິຜົນສູງຂຶ້ນ, - ຄວາມສາມາດໃນການສືບສວນການຟອກເງິນຢູ່ໃນ ສປປ ລາວໄດ້ເພີ່ມຂຶ້ນ, - ພະນັກງານປະຕິບັດມາດຕະການດ້ານກົດໝາຍຂອງແຂວງ ແລະ ເມືອງກໍຈະໄດ້ຮັບການຝຶກອົບຮົມຫຼາຍຂຶ້ນ.
ຜົນຈະໄດ້ຮັບ:
- ຈຳນວນກໍລະນີການຕ້ານຜູ້ຄ້າຂາຍຢາເສບຕິດກໍຈະມີຫຼາຍຂຶ້ນ, - ຈຳນວນ ແລະ ຕົວເລກ ການຈັບຕົວຜູ້ຕ້ອງຫາ ແລະ ການຢຶດຢາເສບຕິດ ກໍຈະໄດ້ເພີ່ມຂຶ້ນ.
ຄູ່ຮ່ວມງານຫ່ວງໃຍລະດັບກະຊວງ
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງປ້ອງກັນ ຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງຍຸຕິທຳ, ກະຊວງການເງິນ(ກົມພາສີ) ອຳນາດການປົກຄອງແຂວງ, ເມືອງ ແລະ ບ້ານ

6. ຂະບວນການຍຸດຕິທຳ ແລະ ລະບຽບກົດໝາຍ

ຈຸດປະສົງ: ເພື່ອຊຸກຍູ້ການປະຕິບັດລະບຽບກົດໝາຍ ແລະ ມາດຕະການໃນການຄວບຄຸມຢາເສບຕິດໃຫ້ມີປະສິດທິຜົນ;

ສິ່ງດັ່ງກ່າວ ແມ່ນສ່ວນໜຶ່ງຂອງຄວາມພະຍາຍາມ ເພື່ອຄວບຄຸມບັນຫາອາຊະຍາກຳທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ອີກດ້ານໜຶ່ງ ກໍເພື່ອຮັກສາໄວ້ຊຶ່ງສິດທິມະນຸດນັ້ນ, ລັດຖະບານ ກຳລັງສ້າງລະບົບສານ ແລະ ການພິພາກສາໃຫ້ເຂັ້ມແຂງ ແລະ ຮັບປະກັນໃຫ້ມີຄວາມຊື່ສັດ ໃນລະບົບດັ່ງກ່າວເຊັ່ນ: ການຕ້ານການສໍ້ລາດບັງຫຼວງ, ສະໜັບສະໜູນໃຫ້ມີລະບົບການບໍລິຫານຈັດການທີ່ດີ, ແລະ ຈັດສັນຫາພະຍານ ແລະ ການປົກຄອງຜູ້ໄດ້ຮັບເຄາະຮ້າຍທີ່ເໝາະສົມ. ອັນນີ້ລວມທັງການຝຶກອົບຮົມເພື່ອສ້າງຄວາມເຂັ້ມແຂງ ແລະ ແກ້ໄຂບັນຫາການຂາດແຄນພະນັກງານທີ່ຈຳເປັນ.

ກິດຈະກຳ:
- ສ້າງຫ້ອງການໄອຍະການສູງສຸດໃຫ້ເຂັ້ມແຂງ ໂດຍຈັດການຝຶກອົບຮົມໃຫ້ພະນັກງານຕື່ມອີກ ແລະ ປະຕິບັດລະບຽບກົດໝາຍ, - ຈັດຝຶກອົບຮົມໃຫ້ແກ່ສະມາຊິກຜູ້ພິພາກສາ ເພື່ອອຳນວຍຄວາມສະດວກ ໃຫ້ເຂົາເຈົ້າສາມາດພິຈາລະນາຄະດີໄດ້ - ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃຫ້ແກ່ພະນັກງານພາສີ ແລະ ເຈົ້າໜ້າທີ່ຕຳຫຼວດປ້ອງກັນ ແລະ ປາບປາມຢາເສບຕິດ,
ໂຕຊີ້ວັດ:
- ຫຼັງຈາກໄດ້ຈັດຝຶກອົບຮົມໃຫ້ແລ້ວ, ຄວາມຮູ້ຂອງຜູ້ພິພາກສາ, ໄອຍະການ ແລະ ພະນັກງານທີ່ກ່ຽວຂ້ອງກັບຢາເສບຕິດຜູ້ອື່ນໆໄດ້ຮັບການປັບປຸງໃຫ້ດີຂຶ້ນ.
ຜົນຈະໄດ້ຮັບ:
- ຄວາມຊື່ສັດດ້ານການພິພາກສາ, ການສືບສວນ-ສອບສວນໃນການພິຈາລະນາຄະດີໂດຍສ້າງຕັ້ງພະແນກຄວບຄຸມດູແລ ແລະ ໃຫ້ການສະໜັບສະໜູນຜູ້ພິພາກສາ, ເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານພາສີ
ຄູ່ຮ່ວມງານຫ່າງຊາດລະດັບກະຊວງ
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ,ອົງການ ກວດກາ ພັກ-ລັດ, ສະມາຄົມທະນາຍຄວາມ, ກະຊວງສຶກສາທິການ (ມະຫາວິທະຍາໄລ ແຫ່ງຊາດ)

7. ການຄວບຄຸມສານເຄທີ່ຕົ້ນໃນການຜະລິດຢາເສບຕິດ ແລະ ການວິໄຈຢາເສບຕິດ:

ຈຸດປະສົງ: ເພື່ອປະຕິບັດມາດຕະການໃນການຄວບຄຸມສານເຄມີຕົ້ນຢ່າງມີປະສິດທິຜົນ ແລະ ປັບປຸງຄວາມສາມາດດ້ານວິຊາການເພື່ອໃຫ້ສາມາດໄຈ້ແຍກສານເສບຕິດຜິດກົດໝາຍຕາມທີ່ຕ້ອງການເພື່ອປະຕິບັດມາດຕະການດ້ານກົດໝາຍ.

ຍ້ອນໄດ້ມີການເພີ່ມຂຶ້ນຂອງການຊົມໃຊ້ ແລະ ການຄ້າຂາຍຢາບ້າ, ຢາເສບຕິດ ສັງເຄາະອື່ນໆ, ແລະ ສານເຄມີຕົ້ນທີ່ເຂົ້າມາ ແລະ ຜ່ານ ສປປ ລາວນັ້ນ, ມັນ ຮຽກຮ້ອງໃຫ້ມີການປັບປຸງຄວາມສາມາດໃນການວິໄຈຢາເສບຕິດ ກໍຄືໃຫ້ມີມາດ ຕະການທີ່ມີປະສິດທິຜົນ ເພື່ອຄວບຄຸມການນຳເຂົ້າ, ສົ່ງອອກ ແລະ ການນຳໃຊ້ ສານເຄມີຕົ້ນ. ເພື່ອຮັບໃຊ້ການຕັດສິນຄະດີຢາເສບຕິດ ມັນມີຄວາມຈຳເປັນຕ້ອງ ມີວິຊາການ ທີ່ໄດ້ຮັບການຝຶກອົບຮົມເປັນຢ່າງດີ ແລະ ສູນວິໄຈທີ່ມີຢູ່ນະຄອນຫຼວງ ວຽງຈັນທີ່ຂຶ້ນກັບກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ແລະ ທີ່ຂຶ້ນ ກັບກະຊວງປ້ອງກັນຄວາມສະຫງົບ, ຄວນມີພະນັກງານ, ພາຫະນະ ແລະ ອຸປະ ກອນທີ່ທັນສະໄໝ ແລະ ມີຄຸນະພາບດີກວ່າເກົ່າ. ພ້ອມກັນນັ້ນກໍຕ້ອງໄດ້ຄົ້ນ ຄ້ວາ ແລະ ພິຈາລະນາສ້າງຕັ້ງສູນວິໃຈຢາເສບຕິດຂຶ້ນຕື່ມຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ມີເງື່ອນໄຂ ແລະ ຄວາມຈຳເປັນ.

ກິດຈະກຳ
- ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ກ່ຽວກັບຄວາມຮູ້ດ້ານວິທະຍາສາດ ແລະ ກົດໝາຍ ທີ່ຕ້ອງການ - ສ້າງຕາໜ່າງຄູ່ຮ່ວມງານ ເພື່ອຄວບຄຸມສານເຄມີຕົ້ນ. - ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ເພື່ອຄວບຄຸມສານເຄມີຕົ້ນໃຫ້ມີປະສິດທິຜົນ. - ສ້າງແຜນງານຝຶກອົບຮົມແຫ່ງຊາດກ່ຽວກັບການວິເຄາະຢາເສບຕິດ, - ຍົກລະດັບ ສູນວິໄຈຢາເສບຕິດທີ່ມີຢູ່ແລ້ວໃຫ້ສູງຂຶ້ນກວ່າເກົ່າ ແລະ ສ້າງສູນວິໄຈຢາເສບຕິດ ເພີ່ມເຕີມຢູ່ຂັ້ນສູນກາງ, ຂັ້ນພາກ ຫຼື ຢູ່ບາງແຂວງທີ່ມີເງື່ອນໄຂ ແລະ ຄວາມຈຳເປັນ - ພັດທະນາລະບົບການອອກເອກະສານຢັ້ງຢືນທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບໃຊ້ຈຸດປະສົງ ຂອງການຕັດສິນຂອງສານ
ໂຕຊີ້ວັດ
- ຈຳນວນຕົວຢ່າງຂອງການວິໄຈສານເສບຕິດຈະໄດ້ເພີ່ມຂຶ້ນທັງມີຄວາມຊັດເຈນ
ຜົນຈະໄດ້ຮັບ
- ມີການຕິດຕາມ ແລະ ຄວບຄຸມສານເຄມີຕາມຊາຍແດນທີ່ເໝາະສົມ. - ມີການໃຫ້ການສະໜັບສະໜູນການພິຈາລະນາຄະດີອາຍາ ແລະ ການວິເຄາະທ່າອ່ຽງການຊົມ ໃຊ້ຢາເສບຕິດ ໃຫ້ທັນເວລາ ແລະ ມີຄວາມຊັດເຈນ
ຄູ່ຮ່ວມງານຫ່ວງຊາດລະດັບກະຊວງ
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງປ້ອງກັນຄວາມ ສະຫງົບ, ກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ), ທ້ອງຖິ່ນຕ່າງໆ.

8. ການພົວພັນພາຍໃນ ແລະ ກັບສາກົນ (ເປັນຫົວຂໍ້ທີ່ກອມເອົາແຜນງານອື່ນໆນຳ)

ຈຸດປະສົງ: ຂະຫຍາຍການຮ່ວມງານ ເພື່ອໃຫ້ ສປປ ລາວ ສາມາດແກ້ໄຂບັນຫາຢາເສບຕິດ ແລະ ຄວບຄຸມການຄ້າຂາຍສານເສບຕິດຜິດກົດໝາຍຂ້າມຊາດ ແລະ ການແລກປ່ຽນບົດຮຽນທີ່ດີ.

ລັດຖະບານລາວ ຮ່ວມກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນອື່ນໆ ໃນລະດັບພາກພື້ນ ແລະ ລະດັບໂລກ ເພື່ອຕ້ານກັບບັນຫາຢາເສບຕິດ. ສປປ ລາວ ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາຂອງສະຫະປະຊາຊາດ ແລະ ການຕົກລົງອື່ນໆ ກ່ຽວກັບການຕ້ານຢາເສບຕິດ ແລະ ຈະເຂົ້າຮ່ວມກອງປະຊຸມ ສະມັດຊາໃຫຍ່ສະຫະປະຊາຊາດ ສະໄໝພິເສດ ໃນປີ 2009 ກ່ຽວກັບສະພາບຢາເສບຕິດຂອງໂລກ ຊຶ່ງແຕ່ລະປະເທດ ມີໜ້າທີ່ ທີ່ຈະຄວບຄຸມການຊົມໃຊ້ຢາເສບຕິດໃນປະເທດຂອງຕົນ. ຢູ່ ສປປ ລາວ ກໍຍັງມີຄູ່ຮ່ວມງານນຳໜ້າຫຼາຍໆ ພາກສ່ວນໃນທຸກດ້ານຂອງການຄວບຄຸມຢາເສບຕິດ ລວມມີອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ພາກທຸລະກິດເອກະຊົນອື່ນໆ.

ກິດຈະກຳ
- ສະໜັບສະໜູນຄວາມສາມາດຂອງລັດຖະບານ ເພື່ອໃຫ້ສັດຕະຍາບັນ ແລະ ປະຕິບັດຕາມພັນທະທີ່ກຳນົດໄວ້ໃນອະນຸສັນຍາ ຂອງອົງການສະຫະປະຊາຊາດ ວ່າດ້ວຍການຕ້ານຢາເສບຕິດ ແລະ ອະນຸສັນຍາ ແລະ ການຕົກລົງສາກົນທີ່ກ່ຽວຂ້ອງອື່ນໆ, - ສະໜັບສະໜູນຄວາມພະຍາຍາມໃນການຄວບຄຸມຢາເສບຕິດຂອງອາຊຽນ (ASEAN) ແລະ ອາຊຽນບວກ ສປ.ຈີນ (ACCORD) - ເຂົ້າຮ່ວມເປັນຄູ່ຮ່ວມງານສອງຝ່າຍ, ສາມຝ່າຍ ແລະ ຫຼາຍຝ່າຍ ກໍຄືຄູ່ຮ່ວມງານຕ້ານຢາເສບຕິດອື່ນໆ.
ໂຕຊີ້ວັດ
- ກິດຈະກຳສາກົນໃນວຽກງານຕ້ານຢາເສບຕິດ ແລະ ວຽກພັດທະນາ ເພື່ອທົດແທນການປູກຝິ່ນ ແລະ ຂະແໜງອື່ນໆກັບບັນດາປະເທດໃກ້ຄຽງ ໄດ້ຖືກຈັດຕັ້ງປະຕິບັດ
ຜົນຈະໄດ້ຮັບ
- ການຮ່ວມມື ແລະ ການວາງແຜນຮ່ວມກັນ ເພື່ອຄວບຄຸມຢາເສບຕິດ ໄດ້ຮັບການເສີມຂະຫຍາຍ.
ຄູ່ຮ່ວມງານຫ່ຽງຊາດລະດັບກະຊວງ
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ, ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ

9. ການເສີມສ້າງຄວາມສາມາດແກ່ສະຖາບັນການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ (ແມ່ນຫົວຂໍ້ທີ່ນອນ ຢູ່ໃນແຜນງານອື່ນໆນຳ)

ຈຸດປະສົງ: ເພື່ອໃຫ້ ສປປ ລາວ ມີຄວາມສາມາດເພີ່ມຂຶ້ນ ເຮັດໃຫ້ແຜນແມ່ບົດແຫ່ງຊາດເພື່ອຄວບຄຸມຢາເສບຕິດສະບັບນີ້ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ໄດ້ຮັບການຍົກລະດັບ ແລະ ເພີ່ມບົດບາດ ເພື່ອປະສານງານ ແລະ ຕິດຕາມກວດກາແຜນງານ ຄວບຄຸມຢາເສບຕິດທີ່ລະບຸໄວ້ໃນແຜນແມ່ບົດສະບັບນີ້. ຍ້ອນຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດເປັນຈຸດປະສານງານ, ລັດຖະບານລາວ ມີເປົ້າໝາຍທີ່ຈະຍົກລະດັບຄວາມສາມາດໃນທຸກດ້ານຂອງແຜນງານ ຄວບຄຸມຢາເສບຕິດແຫ່ງຊາດ.

ກິດຈະກຳ
- ຝຶກອົບຮົມພະນັກງານ ຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອໜ້າທີ່ສະເພາະດ້ານເຊັ່ນ: ດ້ານການປະຕິບັດມາດຕະການທາງດ້ານກົດໝາຍ, ການວິໄຈຢາເສບຕິດ, ການບຳບັດ-ຟື້ນຟູຜູ້ຕິດຢາເສບຕິດ, ການວິເຄາະຂໍ້ມູນ ແລະ ດ້ານອື່ນໆທີ່ກ່ຽວຂ້ອງ.
ໂຕຊີ້ວັດ
- ໄດ້ສຳເລັດການຝຶກອົບຮົມໃນດ້ານຕ່າງໆ ທີ່ກ່ຽວຂ້ອງ ແລະ ພະນັກງານທີ່ໄດ້ຮັບການຝຶກອົບຮົມພວມໝູນໃຊ້ຢູ່ໃນຂະແໜງຄວບຄຸມຢາເສບຕິດຕ່າງໆ.
ຜົນຈະໄດ້ຮັບ
- ໄດ້ຍົກລະດັບຄວາມສາມາດ ໃຫ້ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ ເພື່ອທຳໜ້າທີ່ປະສານການຈັດຕັ້ງປະຕິບັດແຜນແມ່ບົດດັ່ງກ່າວ.
ຄູ່ຮ່ວມງານທ່ຽງຊາດລະດັບກະຊວງ
ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກະຊວງການຕ່າງປະເທດ, ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຜນການ ແລະ ການລົງທຶນ, ສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ, ອົງການກວດກາພັກ-ລັດ, ອຳນາດການປົກຄອງທ້ອງຖິ່ນ.

ການສິ້ນສຸດຂອງແຜນແມ່ບົດ:

ລັດຖະບານລາວ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການກວດກາການລັກລອບຜະລິດ ຝິ່ນ, ຄວບຄຸມການຄ້າຂາຍ ແລະ ປ້ອງກັນການຊົມໃຊ້ຢາເສບຕິດຜິດກົດໝາຍ ລວມທັງຢາບ້າ, ກັນຊາ, ເຮໂລອິນ, ການນຳໃຊ້ຢາເສບຕິດ ໂດຍການສັກສີດຢາເຂົ້າເສັ້ນເລືອດ, ເຊື້ອເອດຈໄອວີ/ເອດສ.

ມາດຕະການເພື່ອປ້ອງກັນ ແລະ ຄວບຄຸມກິດຈະກຳທີ່ກ່ຽວຂ້ອງກັບຢາເສບຕິດ ເຊັ່ນ: ການສໍ້ລາດບັງຫຼວງ, ການກໍ່ອາຊະຍາກຳ ແລະ ການໃຊ້ຄວາມຮຸນແຮງ ອັນຈະມີຜົນກະທົບທາງລົບ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຕໍ່ຄວາມ ສະຫງົບປອດໄພຂອງປະເທດ, ເປັນມູລິມະສິດແຫ່ງຊາດ.

ແຜນແມ່ບົດດັ່ງກ່າວໄດ້ໃຫ້ທິດສະດີ ເພື່ອໃຫ້ ສປປ ລາວ ສາມາດແກ້ໄຂບັນຫາ ທີ່ກ່ຽວຂ້ອງກັບຢາເສບຕິດ ທີ່ເກີດຂຶ້ນທັງອັນເກົ່າ ແລະ ອັນໃໝ່ໄດ້. ນອກຈາກນີ້ ມັນຍັງຈະຊ່ວຍເສີມສ້າງຄວາມສາມາດໃຫ້ຄະນະກຳມະການແຫ່ງຊາດ ເພື່ອກວດ ກາ ແລະ ຄວບຄຸມຢາເສບຕິດ ແລະ ບັນດາກະຊວງຄູ່ຮ່ວມງານ ແລະ ພາກສ່ວນ ປະສານງານອື່ນໆ ເພື່ອຄຸ້ມຄອງການຄວບຄຸມຢາເສບຕິດຢ່າງຕັ້ງໜ້າ, ໂດຍມີ ການປະເມີນຄວາມສ່ຽງ, ແຜນການໄລຍະຍາວ ແລະ ການພັດທະນາຄວາມສາ ມາດແບບຕໍ່ເນື່ອງ.

ສປປ ລາວ ຄາດຫວັງວ່າ ບັນຫາຢາເສບຕິດຜິດກົດໝາຍ ຈະສາມາດຖືກແກ້ໄຂ ໄດ້ເປັນຢ່າງດີ ໂດຍສະເພາະການລົບລ້າງການປູກຝິ່ນ ຈະມີຄວາມຍືນຍົງ, ການ ຊົມໃຊ້ຢາບ້າໃນໝູ່ຊາວໜຸ່ມ ເຍົາວະຊົນ ຈະຫຼຸດລົງເທື່ອລະກ້າວ, ການປະຕິບັດລະ ບຽບກົດໝາຍ ແລະ ເສີມຂະຫຍາຍວຽກງານການຕ້ານຢາເສບຕິດກໍຈະຖືກຍົກສູງ ຂຶ້ນຕື່ມອີກບາດກ້າວໜຶ່ງ.

ຢາກເຮັດຄືແນວນັ້ນໄດ້, ສປປ ລາວ ຈະຕ້ອງໄດ້ແກ້ໄຂສາເຫດຕົ້ນຕໍຂອງຢາເສບຕິດ, ການຜະລິດ, ການຄ້າຂາຍ ແລະ ການຊົມໃຊ້ຢາເສບຕິດ. ແທນທີ່ຈະມີພັນທະໃນການແກ້ໄຂສະຖານທີ່ກຳລັງປ່ຽນແປງເທົ່ານັ້ນ, ສປປ ລາວ ຍັງຈະໄດ້ເລີ່ມເບິ່ງໄປລ່ວງໜ້າເຖິງທ່າອ່ຽງ ແລະ ປະເມີນເບິ່ງຄວາມສ່ຽງຕ່າງໆ ທີ່ກ່ຽວຂ້ອງໃຫ້ແນ່ນອນ ກໍຄືພັດທະນາວັດທະນະທຳ ຕ້ານຢາເສບຕິດແບບກ້າວຂ້າງ.

ມູນຄ່າຂອງແຜນງານຍຸດທະສາດໃນແຜນແມ່ບົດແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ

ມູນຄ່າຄາດຄະເນ ຂອງແຜນງານຕ່າງໆນີ້ ແມ່ນ 72,000,000 ໂດລາສະຫະລັດ ພາຍໃນໄລຍະເວລາ 5 ປີ (ຈາກປີ 2009-2013). ທຶນດັ່ງກ່າວນີ້ ຈະນຳໃຊ້ເຂົ້າໃນແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງດັ່ງລຸ່ມນີ້, ຊຶ່ງໃຫ້ການສະໜັບສະໜູນ 9 ແຜນງານໃຫຍ່ຂອງແຜນແມ່ບົດແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ:

ແຜນງານໃຫຍ່ຂອງແຜນແມ່ບົດແຫ່ງຊາດ		ມູນຄ່າ (ໂດລາສະຫະລັດ)
1	ການວິເຄາະທ່າອ່ຽງຂອງຢາເສບຕິດ ແລະ ການປະເມີນຄວາມສ່ຽງ(ຫົວຂໍ້ທີ່ກວມເອົາແຜນງານອື່ນໆນຳ)	500,000
2	ການພັດທະນາເພື່ອຫົດແທນການປູກຝິ່ນ ແລະລຶບລ້າງຄວາມ ທຸກຍາກ	44,000,000
3	ການຫຼຸດຜ່ອນຄວາມຕ້ອງການໃນການຊົມໃຊ້ຢາເສບຕິດ, (ເປັນຕົ້ນຢາບ້າ, ການປ້ອງກັນເຊື້ອເອດຈໄອວີ/ເອດສ)	16,000,000
4	ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ, ການປຸກລະດົມຄົນເຂົ້າຮ່ວມຕ້ານຢາເສບຕິດ	1,500,000
5	ການນຳໃຊ້ມາດຕະການທາງດ້ານກົດໝາຍ	4,000,000
6	ຂະບວນການຍຸຕິທຳ ແລະ ລະບຽບກົດໝາຍ	4,000,000
7	ການຄວບຄຸມສານເຄມີຕົ້ນ ໃນການຜະລິດຢາເສບຕິດ ແລະ ການວິໄຈຢາເສບຕິດ	1,000,000
8	ການພົວພັນ ແລະ ຮ່ວມມືກັບສາກົນ (ຫົວຂໍ້ທີ່ກວມເອົາແຜນງານອື່ນໆນຳ)	500,000
9	ການຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ອົງການຕ່າງໆ ທີ່ກ່ຽວຂ້ອງ(ຫົວຂໍ້ທີ່ກວມເອົາແຜນງານອື່ນໆນຳ)	500,000
ລວມມູນຄ່າທັງໝົດ		72,000,000

ຄວາມສ່ຽງຖ້າຫາກບໍ່ແກ້ໄຂບັນຫາຢາເສບຕິດ ແລະ ຕ້ານອາຊະຍາກຳຢູ່ ສປປ ລາວ:

ສປປລາວ ແມ່ນຢູ່ໃນຫ້ວງລ້ອມຫ້ວງຕໍ່. ຖ້າບໍ່ໃຫ້ການຊ່ວຍເຫຼືອທີ່ເໝາະສົມ, ພຽງພໍ ແລະ ທີ່ທັນເວລາ, ຈະມີຄວາມສ່ຽງຕໍ່ການສູນເສຍຄວາມສຳເລັດທີ່ຍາດມາໄດ້. ຖ້າຫາກ ຜູ້ທີ່ເຄີຍປູກ ແລະ ສູບຝິ່ນກັບຄືນມາອີກ ເພື່ອຄວາມຢູ່ລອດຂອງເຂົາເຈົ້າ, ບວກກັບ ການເພີ່ມຂຶ້ນຂອງການຄ້າຂາຍຢາຝິ່ນ, ຢາບ້າ, ເຮໂຣອິນ ແລະ ການຄ້າມະນຸດ ຂ້າມຊາຍແດນ, ຈະມີການສໍ້ລາດບັງຫຼວງ, ການຟອກເງິນ ແລະ ການກໍ່ອາຊະ ຍະກຳ ທີ່ກ່ຽວຂ້ອງ ລວມທັງການກໍ່ອາຊະຍາກຳຂ້າມຊາດແບບມີການຈັດຕັ້ງເພີ່ມຂຶ້ນ.

ການເຕີບໂຕຂອງການກໍ່ອາຊະຍາກຳ ແລະ ສະພາບຢາເສບຕິດເປັນອັນຕະລາຍດັ່ງ ກ່າວນັ້ນ, ມັນຈະເປັນໄພຂົ່ມຂູ່ຕໍ່ຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງຂອງຊາດທີ່ຈຳເປັນເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ການ ພັດທະນາ. ຖ້າຫາກບໍ່ມີການສະກັດກັ້ນສະພາບດັ້ງກ່າວ, ມັນຈະເປັນໄພຂົ່ມຂູ່ຕໍ່ການ ພັດທະນາເສດຖະກິດສັງຄົມຂອງພາກພື້ນທັງໝົດ.

ການທ້າທາຍກ່ຽວກັບການຈັດຕັ້ງປະຕິບັດ:

ແຜນແມ່ບົດສະບັບນີ້ ຈະປະສົມປະສານກັບແຜນແມ່ບົດແຫ່ງຊາດອື່ນໆ ເຊັ່ນ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ນອກຈາກນັ້ນ, ແຜນແມ່ບົດດັ່ງກ່າວ ຍັງຕິດພັນ ແລະ ຄຸ້ມຄອງຮ່ວມກັບຜູ້ຮ່ວມງານຕ່າງໆທີ່ມີແຜນງານ ແລະ ໂຄງການ ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຂະແໜງການທີ່ກ່ຽວຂ້ອງ ອື່ນໆ. ໂດຍອີງຕາມເນື້ອໃນຈິດໃຈຂອງຖະແຫຼງການປາຣີ ແລະ ວຽງຈັນ, ແຜນ ແມ່ບົດເພື່ອຄວບຄຸມຢາເສບຕິດສະບັບນີ້ ແມ່ນແນໃສ່ເພື່ອເຮັດໃຫ້ມີຜົນກະທົບໃນ ທາງບວກ ແລະ ການປະສານສົມທົບກັນໃຫ້ໄດ້ຫຼາຍທີ່ສຸດ ໂດຍມີການປະສານ ງານຮອບດ້ານ ແລະ ຮ່ວມໄມ້ຮ່ວມມືກັນ ເພື່ອຮັບປະກັນໃຫ້ການຊ່ວຍເຫຼືອມີປະ ສິດທິຜົນ.

ຄູ່ຮ່ວມງານລວມມີ ອົງການ ແລະ ໜ່ວຍງານຕ່າງໆຂອງ ສປຊ ເຊັ່ນ: ອົງການ ສປຊ ເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກຳ (UNODC), ອົງການ ສປຊ ເພື່ອພັດທະນາອຸດສາຫະກຳ (UNIDO), ອົງການອາຫານໂລກ (WFP), ອົງການກອງທຶນສຸກເສີນເພື່ອເດັກສາກົນ (UNICEF), ອົງການ ສປຊ ເພື່ອຕ້ານ ເອດສ, ອົງການອະນາໄມໂລກ (WHO), ອົງການ ສປຊ ເພື່ອການພັດທະນາ (UNDP), ອົງການອາຫານ ແລະ ການກະເສດ (FAO), ສະຖາບັນການເງິນສາກົນ ເຊັ່ນ: ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB), ແລະ ອົງການ ກອງທຶນສາກົນເພື່ອພັດທະນາກະສິກຳ (IFAD), ຄູ່ຮ່ວມງານເພື່ອການພັດທະນາ ສອງຝ່າຍເຊັ່ນ: ປະເທດ ສປ ຈີນ, ສ.ອິນເດຍ, ສ. ເກົາຫຼີ, ສະຫະພັນຣັດເຊຍ,

ກຸ່ມປະເທດທີ່ໃຫ້ການຊ່ວຍເຫຼືອດ້ານຢາເສບຕິດ (Mini-dublin Group) ກໍຄື ປະເທດສະມາຊິກອາຊຽນ, ອົງການຄຣິດ ສະຈັກແຫ່ງນໍເວ ກໍຄືອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງສາກົນອື່ນໆ ພ້ອມທັງບັນດາກະຊວງ, ອົງການຈັດຕັ້ງມະຫາຊົນ ແລະ ສະຖາບັນຄົ້ນຄ້ວາຕ່າງໆ ທີ່ກ່ຽວຂ້ອງ.

ສະຫຼຸບຄວາມ:

ຢາເສບຕິດ ແລະ ບັນຫາທີ່ກ່ຽວຂ້ອງກັບຢາເສບຕິດ ແມ່ນບັນຫາຂອງໂລກ. ສປປ ລາວ ປະເທດດຽວ ບໍ່ສາມາດຈະແກ້ໄຂບັນຫາເຫຼົ່ານີ້ໄດ້. ມັນຮຽກຮ້ອງໃຫ້ມີການ ຊ່ວຍເຫຼືອຈາກປະເທດເພື່ອນມິດໃນທົ່ວໂລກ ແລະ ອົງການຈັດຕັ້ງສາກົນຕ່າງໆ ໃຫ້ມີຄວາມພະຍາຍາມຮ່ວມກັນ ເພື່ອແກ້ໄຂໄພຂົ່ມຂູ່ທີ່ຮ້າຍແຮງເຫຼົ່ານີ້.

ລັດຖະບານແຫ່ງ ສປປ ລາວ ຍິນດີຮັບເອົາການຊ່ວຍເຫຼືອ ແລະ ການສະໜັບ ສະໜູນທາງດ້ານການເງິນ ແລະ ດ້ານວິຊາການ ເພື່ອໃຫ້ຕົນເອງສາມາດບັນລຸ ເປົ້າໝາຍດັ່ງກ່າວ ແລະ ສ້າງສັງຄົມ ໃຫ້ມີຄວາມສຸກ ປາດສະຈາກຢາເສບຕິດ ແລະ ໃຫ້ອັດທະນາຖາວອນ ພາຍໃຕ້ລະບຽບກົດໝາຍ ເພື່ອປ່ອງຊົນລາວທັງຊາດ ກ້າວໄປສູ່ວິໃສທັດ ອາຊຽນປອດຢາເສບຕິດ ໃນປີ 2015.

ຍຸດທະສາດ ແລະ ແຜນງານແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ:

1. ປີ 1994-2000: ໄດ້ມີແຜນງານແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ (ອ່າດ້ວຍການຄວບຄຸມຢາເສບຕິດແບບດຸ່ນດ່ຽງເທື່ອລະກ້າວ ໂດຍເນັ້ນໜັກໃສ່ການພັດທະນາທາສິ່ງທົດແທນ)

2. ປີ 2000-2006: ໄດ້ມີແຜນງານລົບລ້າງການປູກຝິ່ນແບບດຸ່ນດ່ຽງ (ອ່າດ້ວຍການພັດທະນາທາສິ່ງທົດແທນ, ການຫຼຸດຜ່ອນການຊົມໃຊ້ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍ)

3. ປີ 2006-2009: ໄດ້ມີແຜນງານແຫ່ງຊາດ ເພື່ອແກ້ໄຂຄວາມທຸກຍາກ ຂອງປະຊາຊົນພາຍຫຼັງຢຸດເຊົາການປູກຝິ່ນ ແລະ ແຜນປະຕິບັດງານ ໄດ້ ເລັ່ງໃສ່ 1,100 ບ້ານບູລິມະສິດ ທີ່ທຸກຍາກທີ່ສຸດ (ໂດຍເນັ້ນໃສ່ການພັດ ທະນາທາສິ່ງທົດແທນ, ການຫຼຸດຜ່ອນການຊົມໃຊ້, ການປູກຈິດສຳນຶກ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍ ຕິດພັນກັບແຜນງານຫຼຸດຜ່ອນ ຄວາມທຸກຈົນ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເທື່ອທີ 6)

4. 2009-2013: ມີແຜນແມ່ບົດແຫ່ງຊາດ ອ່າດ້ວຍການຄວບຄຸມຢາເສບ ຕິດ (ແຜນຮອບດ້ານ). ແຜນແມ່ບົດແຫ່ງຊາດ ອ່າດ້ວຍການຄວບຄຸມຢາ ເສບຕິດນີ້ ຈະໃຫ້ທິດທາງນະໂຍບາຍ ແກ່ຄະນະຊີ້ນຳຂະບວນຕ້ານຢາເສບ ຕິດຂັ້ນສູນກາງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກປະທານປະເທດ ແຫ່ງ ສປປ ລາວ ໃນເດືອນ ຕຸລາ 2001.